

# ຄຳແນະນຳ ແລະ ແຜນຈັດຕັ້ງປະຕິບັດ ແຜນແມ່ບົດພັດທະນາ ແລະ ຄຸ້ມຄອງເຂດທ່ອງທ່ຽວລະດັບຊາດ ເມືອງວັງວຽງ ແລະ ບໍລິເວນອ້ອມຮອບ, ສຳລັບປີ 2025 - 2035

ໂດຍ: ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮ່ວມກັບ ອົງການປົກຄອງແຂວງວຽງຈັນ, ເມືອງວັງວຽງ ແລະ ບໍລິສັດ Hansen Partnership & Archineer

ສະໜັບສະໜູນໂດຍ: ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ອະນຸພາກພື້ນແມ່ນ້ຳຂອງ ໄລຍະ 2.

**ສາລະບານ**

1. ແຜນປະຕິບັດງານລວມທັງຂໍ້ແນະນຳການດຳເນີນງານ
2. ຄຳແນະນຳການອອກແບບພື້ນທີ່ສາທາລະນະ
3. ຄຳແນະນຳການອອກແບບສຳລັບພາກເອກະຊົນ
4. ແນວຄວາມຄິດການພັດທະນາ



# 1

# ແຜນປະຕິບັດງານ ລວມທັງຂໍ້ແນະນຳການດຳເນີນງານ

**ຄຸນລັກຊະນະຂອງຕົວເມືອງ**

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TC1 - ເພື່ອປັບປຸງເສັ້ນທາງໃນຕົວເມືອງໃຫ້ເປັນສີຂຽວໂດຍການປູກຕົ້ນໄມ້ໃຫ້ຮົ່ມ** | | | | | |
| 2025–2035 (ພວມຈັດຕັ້ງປະຕິບັດ | ໂຍທາທິການ ແລະ ຂົນສົ່ງ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງ | ຖວທ ໂດຍ ຜ່ານ ADB ແລະ/ຫຼື ຜູ້ໃຫ້ທຶນອື່ນໆ | ສູງ | B | 1. ຢັ້ງຢືນການອອກແບບພູມິທັດຕາມຖະໜົນສາຍຕ່າງໆ ແລະ ການປະເມີນມູນຄ່າ.<br>2. ການອອກແບບການປະສານງານລະຫວ່າງລະບົບລະບາຍນ້ຳ ແລະ ໂຄງລ່າງເສັ້ນທາງ (DAO).<br>3. ຂັ້ນຕອນການອອກແບບລະອຽດທາງດ້ານເຕັກນິກ ແລະ ການປະມູນ<br>4. ແຕ່ງຕັ້ງຜູ້ຮັບເໝົາ ແລະ ເຊັນສັນຍາກໍ່ສ້າງຕາມຂັ້ນຕອນ.<br>5. ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງສັນຍາ. |
| **TC2 – ເພື່ອປັບປຸງສິ່ງອານວຍຄວາມສະດວກຕາມ ສາຍນ້ຳຂອງ ໂດຍມີທາງຍ່າງ/ເສັ້ນທາງສາທາລະນະທາງທິດຕາເວັນຕົກຂອງສາຍນ້ຳຂອງ ແລະ ຂົວໃໝ່ໄປທາງທິດເໜືອໃກ້ກັບເກາະໄຊຂອງເພື່ອສ້າງໃຫ້ເປັນ "ວົງຈອນການທ່ອງທ່ຽວເຂດແຄມນ້ຳຂອງ"** | | | | | |
| 2024-2028 (ພວມຈັດຕັ້ງ ປະຕິບັດ) | ໂຍທາທິການ ແລະ ຂົນສົ່ງ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | ພາກລັດ ເອກະຊົນ ຜູ້ໃຫ້ທຶນ | ສູງ | A | 1. ການວາງແຜນ ແລະ ສຳຫຼວດພື້ນທີ່ ແລະ ການສຶກສາດ້ານອຸທົກກະສາດ.<br>2. ສຶກສາຄວາມເປັນໄປໄດ້ໃນການຈັດສັນທີ່ດິນ ເພື່ອອຳນວຍຄວາມສະດວກໃນການເຊື່ອມຕໍ່.<br>3. ຂັ້ນຕອນການອອກແບບລະອຽດທາງດ້ານເຕັກນິກ ແລະ ການປະມູນ<br>4. ແຕ່ງຕັ້ງຜູ້ຮັບເໝົາ ແລະ ເຊັນສັນຍາກໍ່ສ້າງຕາມຂັ້ນຕອນ.<br>5. ການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງສັນຍາ. |
| **TC3 - ເພື່ອປັບປຸງປ້າຍຊີ້ບອກ ແລະ ປ້າຍແນະນຳສະຖານທີ່ທ່ອງທ່ຽວທັງໝົດ ຮູບແບບສີປ້າຍ, ໂຕໜັງສື, ພາສາ ທີ່ນຳໃຊ້ໃຫ້ມີຄວາມສອດຄ່ອງກັບຄູ່ມືແນະນຳປ້າຍຊີ້ບອກສະຖານທີ່ທ່ອງທ່ຽວ ແລະ ປ້າຍນຳສະເໜີຂໍ້ມູນແຫຼ່ງທ່ອງທ່ຽວ ໃນ ສປປ ລາວ,** | | | | | |
| 2025 - 2026 | ໂຍທາທິການ ແລະ ຂົນສົ່ງ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, | ພາກລັດ ເອກະຊົນ ຜູ້ໃຫ້ ທຶນອື່ນໆ | ຕ່ຳ | C | 1. ວ່າຈ້າງທີ່ປຶກສາດ້ານການສື່ສານ ແລະ ການຕະຫຼາດເພື່ອອອກແບບໂລໂກ້.<br>2. ກຳນົດຈຸດທີ່ຕັ້ງຂອງປ້າຍຕ່າງໆ.<br>3. ຈັດຫາບໍລິສັດ ເພື່ອຜະລິດ ແລະ ຕິດຕັ້ງປ້າຍ. |

# ແຜນຈັດຕັ້ງປະຕິບັດ

| ໄລຍະ ເວລາ | ອົງການທີ່ ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າ ໃຊ້ຈ່າຍ | ບຸລິມະ ສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TC4 - ເພື່ອປັບປຸງຮ່ອງລະບາຍນໍ້າພາຍໃນຕົວເມືອງ ແລະ ຕາມວົງຈອນທ່ອງທ່ຽວໃຫ້ພຽງພໍໃນຂອບເຂດພື້ນທີ່ ທີ່ມີການພັດທະນາ** | | | | | |
| 2024- ພອມຈັດ ຕັ້ງ ປະຕິບັດ | ໂຍທາທິການ ແລະ ຂົນສົ່ງ, ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງ | ຍທຂ ໂດຍ ຜ່ານ ADB ແລະ/ຫຼື ຜູ້ໃຫ້ ທຶນອື່ນໆ ແລະພາກ ເອກະຊົນ | ສູງ | B | 1. ໃນເຂດຕົວເມືອງ ດໍາເນີນການຈັດຫາທີ່ປຶກສາ/ວິສະວະກອນດ້ານລະບົບລະບາຍນໍ້າ ເພື່ອທົບທວນຄືນປະເພດຂອງລະບົບລະບາຍນໍ້າທີ່ສາມາດປັບປຸງ ແລະ ປະຕິບັດໄດ້.<br>2. ກໍານົດທາງເລືອກ ທີ່ເໝາະສົມ ແລະ ດໍາເນີນຂະບວນການການປະເມີນຜົນກະທົບ/ການປຶກສາຫາລື/ການອະນຸມັດ/ການຈັດຕັ້ງປະຕິບັດ.<br>3. ຂອບເຂດການຂະຫຍາຍຕົວເມືອງ ແລະ ຈຸດພັດທະນາແຫຼ່ງທ່ອງທ່ຽວ, ໃຫ້ກໍານົດ ແລະ ເຜີຍແຜ່ບົດແນະນໍາ ແລະ ເຄື່ອງມື/ມາດຕະຖານຕ່າງໆໃຫ້ແກ່ນັກລົງທຶນໃນການພັດທະນາພື້ນຖານໂຄງລ່າງ.<br>4. ຕິດຕາມ ແລະ ຮັບປະກັນການຮັກສາລະບົບລະບາຍນໍ້າ. |
| **TC5 –** ເພື່ອປັບປຸງເສັ້ນທາງເຂົ້າເຖິງຕົວເມືອງຈາກສະຖານີລົດໄຟ, ທາງດ່ວນ ຫາເຂດໃຈກາງເມືອງ ແລະ ຈຸດໝາຍປາຍທາງການທ່ອງທ່ຽວທີ່ສໍາຄັນ, ສ້າງສະຖານີຂົນສົ່ງໂດຍສານໃນຕົວເມືອງ (ຢູ່ເຂດສະໜາມບິນເກົ່າ) | | | | | |
| 2025-2030 | ໂຍທາທິການ ແລະ ຂົນສົ່ງ, ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ | ຍທຂ ໂດຍ ຜ່ານ ADB ແລະ/ຫຼື ຜູ້ໃຫ້ ທຶນອື່ນໆ ແລະພາກ ເອກະຊົນ | ປານກາງ | A | 1. ເຈລະຈາກັບຜູ້ໃຫ້ບໍລິການຂົນສົ່ງຂອງລັດ ແລະ ເອກະຊົນ ແລະ ຜູ້ສໍາປະທານເດີ່ນສະໜາມບິນເກົ່າ.<br>2. ກໍານົດເສັ້ນທາງຂົນສົ່ງສາທາລະນະພາຍໃນ ແລະ ອ້ອມຮອບຕົວເມືອງວັງວຽງ.<br>3. ສ້າງພື້ນຖານໂຄງລ່າງ (ສະຖານີ, ຂໍ້ມູນຂ່າວສານ, ແຂງ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ). |
| **TC6 -** ເພື່ອຈັດຕັ້ງປະຕິບັດຕາມຂໍ້ແນະນໍາໃນການພັດທະນາ ແລະ ການອອກແບບຕ່າງໆທີ່ໄດ້ກໍານົດໄວ້ແລ້ວ ເຊັ່ນ: ການກໍານົດຄວາມສູງຂອງອາຄານ, ການຈັດສັນເຂດແຄມສາຍນໍ້າຊອງ ແລະ ຄໍານຶງເຖິງຜົນກະທົບຕໍ່ທັດສະນີຍະພາບ ແລະ ອື່ນໆ. | | | | | |
| 2024 | ໂຍທາທິການ ແລະ ຂົນສົ່ງ, ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ DAO | ພາກລັດ | ຕໍ່າ | A | 1. ນໍາເອົາຂໍ້ແນະນໍາການອອກແບບທີ່ໄດ້ກໍານົດໃນແຜນແມ່ບົດເຂົ້າໃນລະບຽບການຂອງລັດທີ່ໄດ້ວາງອອກ. |

# ແຜນຈັດຕັ້ງປະຕິບັດ

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TC7** - ເພື່ອປັບປຸງນິຕິກຳກ່ຽວກັບການກໍ່ສ້າງໃນປະຈຸບັນເພື່ອຮັບປະກັນຄວາມຍືນຍົງ (ແຜງພະລັງງານແສງຕາເວັນ,ຖັງເກັບນໍ້າ, ການສົ່ງເສີມບັນດາຄົວເຮືອນ ແລະ ຫົວໜ່ວຍທຸລະກິດ ຄັດແຍກຂີ້ເຫຍື້ອ ແລະ ນຳມາໃຊ້ຄືນໃຫມ່). | | | | | |
| 2024 | ໂຍທາທິການ ແລະ ຂົນສົ່ງ, ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ DAO | ພາກລັດ | ຕໍ່າ | B | 1. ປຶກສາຫາລືກັບພາກສ່ວນກ່ຽວຂ້ອງ.<br>2. ສະເໜີບົດແນະນຳເຂົ້າໃນນິຕິກຳ/ແຜນການຄຸ້ມຄອງທີ່ກ່ຽວຂ້ອງ.<br>3. ຮັບປະກັນການປະເມີນຜົນຂອງການປະຕິບັດມາດຕະການໃນເວລາທີ່ການປະເມີນຜົນການພັດທະນາໃຫມ່. |
| **TC8** - ສ້າງ ແລະ ປັບປຸງບ່ອນສະແດງສິລະປະ, ວັດທະນະທຳ ແລະ ບັນດາວັດວາອາຮາມຕ່າງໆ ເພື່ອເປັນການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳ, ຮີດຄອງປະເພນີ. | | | | | |
| 2023-ພວມດຳເນີນ | ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ອຳນາດການປົກຄອງບ້ານ DAO | ພາກລັດ ອົງການຜູ້ໃຫ້ທຶນ | ປານກາງ ຫາ ສູງ | B | 1. ທົບທວນ ແລະ ກຳນົດຊັບພະຍາກອນ ທີ່ມີທ່າແຮງ ແລະ ກຳນົດບູລິມະສິດ.<br>2. ບັນຈຸເອົາການຂຶ້ນທະບຽນສະຖານທີ່ ແລະ ຂໍ້ກຳນົດການປະເມີນຜົນກະທົບຕໍ່ຮີດຄອງປະເພນີ ແລະ ວັດທະນະທຳ, ເຂົ້າໃນລະບຽບການຂອງລັດ ເຊິ່ງທຸກການພັດທະນາໃໝ່ຕ້ອງປະຕິບັດຕາມ.<br>3. ຈັດສັນທຶນຮອນ ແລະ ຊັບພະຍາກອນ ເພື່ອໃຫ້ມີຄວາມຄືບໜ້າໃນການປັບປຸງ ຫຼື ບຳລຸງສ້າງສິ່ງອຳນວຍຄວາມສະດວກ. |
| **TC9** - ເພື່ອສ້າງປະຕິທິນກິດຈະກຳປະຈຳປີ ແລະ ສະເຫຼີມສະຫຼອງງານບຸນປະເພນີຕ່າງໆ ໂດຍມີການປັບປຸງປະຕິທິນກິດຈະກຳປະຈຳປີເພື່ອໂຄສະນາຢ່າງກ້ວາງຂວາງ ແລະ ໃຫ້ນັກທ່ອງທ່ຽວໄດ້ວາງແຜນການເດີນທາງມາທ່ອງທ່ຽວເມືອງວັງວຽງ. | | | | | |
| 2024-ພວມດຳເນີນ | ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ອຳນາດການປົກຄອງບ້ານ DAO | ພາກລັດ ພາກເອກະຊົນ | ຕໍ່າ | C | 1. ກຳນົດ ແລະ ສ້າງປະຕິທິນຂອງງານບຸນງານຕ່າງໆ.<br>2. ແຕ່ງຕັ້ງຜູ້ຮັບຈັດສະຖານທີ່ ແລະ ຜູ້ຈັດງານພາຍໃນຫ້ອງການທີ່ກ່ຽວຂ້ອງ ເພື່ອເປັນຜູ້ປະສານຈັດງານບຸນ ແລະ ງານຕ່າງໆ.<br>3. ຈັດຫາແຫຼ່ງທຶນ ເພື່ອສະຫນັບສະຫນູນກິດຈະກຳສະເຫຼີມສະຫຼອງເຫຼົ່ານີ້.<br>4. ຈັດງານບູນຕ່າງໆ (ເຊັ່ນ: ສູງສຸດ 2 ງານບຸນໃນປີທຳອິດ). |

# ແຜນຈັດຕັ້ງປະຕິບັດ

| ໄລຍະ ເວລາ | ອົງການທີ່ ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າ ໃຊ້ຈ່າຍ | ບູລິມະ ສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TC10** - ເພື່ອປັບປຸງສະໜາມບິນເກົ່າບາງສ່ວນໃຫ້ເປັນສວນສາທາລະນະໃນຕົວເມືອງ, ໃຫ້ເປັນພື້ນທີ່ຈອດລົດສາທາລະນະ (ບ່ອນຈອດລົດ), ເວທີການສະແດງກາງແຈ້ງ, ສິ່ງອໍານວຍຄວາມສະດວກສາທາລະນະ ແລະ ພື້ນທີ່ສໍາລັບການພັກຜ່ອນ,ຈັດງານບຸນ ແລະ ການຊຸມນຸມທີ່ສໍາຄັນອື່ນໆ. | | | | | |
| 2024-2028 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ໂຍທາທິການ ແລະ ຂົນສົ່ງ DAO | ພາກເອກະຊົນ (ການປະກອບສ່ວນການພັດທະນາ) | ສູງ | B | 1. ເຈລະຈາກັບຜູ້ສໍາປະທານທີ່ດິນກ່ຽວກັບການແບ່ງປັນ ແລະ ຈັດສັນທີ່ດິນ ເພື່ອສາທາລະນະປະໂຫຍດ.<br>2. ມອບໂອນທີ່ດິນທີ່ກໍານົດໄວ້ສໍາລັບການນໍາໃຊ້ສາທາລະນະ – ອອກແບບ, ບັນທຶກ ແລະ ມອບຮັບຕາມຄວາມເຫມາະສົມ. |
| **TC11** - ເພື່ອການພັດທະນາໃໝ່ໃນພື້ນທີ່ຂະຫຍາຍຕົວ ຮຽກຮ້ອງໃຫ້ຜູ້ພັດທະນາປະກອບສ່ວນທີ່ດິນສ່ວນໃດໜຶ່ງໃຫ້ເປັນພື້ນທີ່ສາທາລະນະໃນເຂດທີ່ເໝາະສົມ | | | | | |
| 2024-ພວມດໍາເນີນ | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ໂຍທາທິການ ແລະ ຂົນສົ່ງ DAO | ພາກລັດ ພາກເອກະຊົນ | ຕໍ່າ | A | 1. ປຶກສາຫາລືກັບພາກລັດກ່ຽວກັບອັດຕາສ່ວນຂອງເນື້ອທີ່ດິນທີ່ຕ້ອງປະກອບສ່ວນໃຫ້ເປັນເຂດສວນສາທາລະນະ.<br>2. ປະຕິບັດກົດລະບຽບໃຫມ່ສໍາລັບພື້ນທີ່ການຂະຫຍາຍຕົວ ທີ່ຊ່ວຍໃຫ້ມີການປະກອບສ່ວນພື້ນທີ່ສາທາລະນະ ຫຼື ການປະກອບສ່ວນດ້ານທຶນຮອນ.<br>3. ກໍານົດຂະບວນການ ຫຼື ເຄື່ອງມືສໍາລັບການກໍານົດຄຸນລັກສະນະຂອງພື້ນທີ່ສາທາລະນະທີ່ຈະປະກອບສ່ວນ, ເຊັ່ນ; ເປັນດິນທີ່ສາມາດເຂົ້າເຖິງໄດ້ໃຊ້ໄດ້...ອື່ນໆ. |
| **TC12** - ເພື່ອສ້າງສວນສາທາລະນະເພື່ອການພັກຜ່ອນ ແລະ ກິດຈະກໍາຍາມຫວ່າງທາງທິດຕາເວັນອອກຂອງສາຍນໍ້າຊອງ ແລະ ທາງທິດເໜືອຂອງເກາະໄຊຊອງຕາມທີ່ໄດ້ກໍານົດໄວ້ໃນແຜນແມ່ບົດ. | | | | | |
| 2025-ກໍາລັງຈັດຕັ້ງປະຕິບັດ | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ໂຍທາທິການ ແລະ ຂົນສົ່ງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ DAO ອໍານາດການປົກຄອງບ້ານ, | ພາກລັດ ພາກເອກະຊົນ | ປານກາງ | C | 1. ສໍາຫຼວດ ແລະ ເກັບກໍາຂໍ້ມູນທີ່ດິນບໍລິເວນທີ່ກ່ຽວຂ້ອງ ແລະ ບັນທຶກລາຍຊື່ເຈົ້າກໍາມະສິດທີ່ດິນອ້ອມຂ້າງ ເພື່ອການປຶກສາຫາລືກ່ຽວກັບໂຄງການ ຕາມຄວາມເໝາະສົມ.<br>2. ສໍາຫຼວດສະຖານທີ່ຈໍາເປັນ, ສໍາຫຼວດພູມສາດ ແລະ ອຸທົກກະສາດ.<br>3. ກະກຽມແຜນແມ່ບົດສໍາລັບການບໍລິການ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ສໍາລັບພື້ນທີ່ສວນສາທາລະນະ.<br>4. ຊອກຫາແຫຼ່ງທຶນເພື່ອຈັດຕັ້ງປະຕິບັດ. |

**ການຂະຫຍາຍຕົວຂອງຕົວເມືອງ**

| ໄລຍະເວລາ | ອົງການທີ່ ຮັບຜິດຊອບ | ແຫຼ່ງທຶນ | ລະດັບ ຄ່າໃຊ້ ຈ່າຍ | ບຸລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **UG1 - ກຳນົດຂອບເຂດການຂະຫຍາຍຕົວຂອງເມືອງທີ່ຊັດເຈນ (ຂອບເຂດການພັດທະນາສູງສຸດ) ເພື່ອປ້ອງກັນການຂະຫຍາຍຕົວເກີນຂອບເຂດໃນອານາຄົດ** | | | | | |
| 2023-2024 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>DAO | ພາກລັດ | ຕໍ່າ | A | 1. ຮັບຮອງ ແລະ ບັນຈຸຂອບເຂດການຂະຫຍາຍຕົວຂອງຕົວເມືອງ ຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດເຂົ້າໃນລະບຽບການ ແລະ ແຜນຜັງລວມຂອງເມືອງວັງວຽງ.<br>2. ຮັບປະກັນເຂດແດນຖືກບັງຄັບໃຊ້ຢ່າງຈິງຈັງ. |
| **UG2 - ກຳນົດການພັດທະນາໃນເຂດຕົວເມືອງ(ພື້ນທີ່ຕົວເມືອງໃນປະຈຸບັນ) ແລະ ຂອບເຂດການຂະຫຍາຍຕົວເມືອງ (ກຳນົດເປັນກຸ່ມ SGA1, SGA2, NGA1, NGA2 ແລະ TOD).** | | | | | |
| 2023/2024 | ຫ້ອງການພັດທະ ນາ ແລະ ບໍລິຫານຕົວເມືອງ<br>ໂຍທາທິການ ແລະ ຂົນສົ່ງ<br>DAO | ພາກລັດ | ຕໍ່າ | A | 1. ປັບປຸງແຜນແບ່ງເຂດນຳໃຊ້ທີ່ດິນໃນລະບຽບການຂອງຜັງເມືອງ ເພື່ອສະແດງໃຫ້ເຫັນການກຳນົດເຂດການຂະຫຍາຍຕົວໃນແຜນແມ່ບົດ.<br>2. ຮັບປະກັນແຜນການແບ່ງເຂດນຳໃຊ້ທີ່ດິນ ທີ່ໄດ້ປັບປຸງຖືກຈັດຕັ້ງປະຕິບັດ. |
| **UG3 - ພັດທະນາພື້ນທີ່ເດີ່ນ ສະໜາມບິນເກົ່າບາງສ່ວນເປັນເຂດພື້ນທີ່ໃຊ້ງານແບບອະເນກປະສົງ** | | | | | |
| ລິເລີ່ມ - ongoing | ຫ້ອງການພັດທະ ນາ ແລະ ບໍລິຫານຕົວເມືອງ<br>ໂຍທາທິການ ແລະ ຂົນສົ່ງ | ພາກລັດ ພາກເອກະຊົນ | ສູງ | B | 1. ຜູ້ສຳປະທານກຳລັງຈະເລີ່ມກໍ່ສ້າງໂຄງການ (ເດືອນພຶດສະພາ 2023). |
| **UG4 – ຄຸ້ມຄອງການພັດທະນາການທ່ອງທ່ຽວໃນເຂດນອກຕົວເມືອງຢ່າງເຂັ້ມງວດ ແລະ ມີການປະເມີນຢ່າງເປັນປົກກະຕິ** | | | | | |

| ໄລຍະເວລາ | ອົງການທີ່ ຮັບຜິດຊອບ | ແຫຼ່ງທຶນ | ລະດັບ ຄ່າໃຊ້ ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| 2023- ກໍາລັງ ຈັດຕັ້ງປະຕິບັດ | ຫ້ອງການພັດທະ ນາ ແລະ ບໍລິຫານຕົວ ເມືອງ<br>ໂຍທາທິການ ແລະ ຂົນສົ່ງ | ພາກລັດ | ຕໍ່າ | A | 1. ສັງລວມເອົາທິດທາງຈາກແຜນ ແມ່ບົດສະບັບນີ້ ກ່ຽວກັບຈຸດ ທີ່ຕັ້ງຂອງແຫຼ່ງທ່ອງທ່ຽວອ້ອມ ຮອບຕົວເມືອງທີ່ເປັນໄປໄດ້ ເຂົ້າໃນລະບຽບການຄຸ້ມຄອງ ທີ່ກ່ຽວຂ້ອງ.<br>2. ເອົາບົດແນະນໍາການພັດທະນາ ເຂດນອກຂອບເຂດການ ຂະຫຍາຍຕົວຂອງຕົວເມືອງ ເຂົ້າໃນລະບຽບການຄຸ້ມຄອງ ທີ່ກ່ຽວຂ້ອງ.<br>3. ຮັບປະກັນການພັດທະນາ ການທ່ອງທ່ຽວທີ່ຢູ່ເຂດນອກ ຕົວເມືອງແມ່ນອະນຸຍາດໃຫ້ ພັດທະນາຢູ່ໃນ "ຈຸດແຫຼ່ງທ່ອງ ທ່ຽວອ້ອມຮອບຕົວເມືອງທີ່ ເປັນໄປໄດ້" ທີ່ໄດ້ກໍານົດໄວ້.<br>4. ປະເມີນການພັດທະນາໃນຈຸດ ດັ່ງກ່າວຕາມແບບ ແລະ ຂໍ້ ແນະນໍາການພດທະນາທີ່ໄດ້ ກໍານົດໄວ້. |
| **UG5 – ນໍາໃຊ້ 'ຮູບແບບການພັດທະນາພື້ນທີ່ຂະຫຍາຍຕົວທີ່ໃກ້ຄຽງ' ສໍາລັບການພັດທະນາເຂດຕ່າງໆທີ່ລວມເຖິງ ໂຄງລ່າງພື້ນຖານຂອງຊຸມຊົນໃໝ່ (ຕົວຢ່າງ: ໂຮງຮຽນໃໝ່, ສູນການແພດ ແລະ ສິ່ງອໍານວຍຄວາມສະດວກອື່ນໆໃນ ຊຸມຊົນ).** | | | | | |
| 2024- ກໍາລັງ ຈັດຕັ້ງປະຕິບັດ | ຫ້ອງການພັດທະນາ ແລະ ບໍລິຫານຕົວ ເມືອງ<br>ໂຍທາທິການ ແລະ ຂົນສົ່ງ<br>ອໍານາດການປົກຄອງ ບ້ານ | ພາກລັດ | ຕໍ່າ - ປານກາງ | A | 1 ແຕ່ງຕັ້ງຜູ້ຊ່ຽວຊານເພື່ອອອກ ແບບ "ຮູບແບບການພັດທະ ນາແບບຊຸມຊົນ" ສໍາລັບເຂດ ການຂະຫຍາຍຕົວໃຫມ່.<br>2 ນໍາສະເໜີ "ຮູບແບບການ ພັດທະນາແບບຊຸມຊົນ" ເຂົ້າ ໃນລະບຽບການຕຸ້ມຄອງທີ່ ກ່ຽວຂ້ອງຂອງລັດ.<br>3 ຮັບປະກັນວ່າພາກລັດປະຕິບັດ ຕາມຮູບແບບການພັດທະນາ |

| ໄລຍະເວລາ | ອົງການທີ່ ຮັບຜິດຊອບ | ແຫຼ່ງທຶນ | ລະດັບ ຄ່າໃຊ້ ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | | | | ແບບຊຸມຊົນ (ລວມເຖິງຂໍ້ກໍານົດສໍາລັບການສະໜອງພື້ນຖານໂຄງລ່າງຊຸມຊົນໃໝ່ໂດຍຜູ້ພັດທະນາ) ໃນເວລາທີ່ການປະເມີນການສະເໜີໂຄງການການພັດທະນາໃໝ່. |
| **UG6** –ດໍາເນີນການປັບປຸງໂຄງລ່າງພື້ນຖານດັ່ງຕໍ່ໄປນີ້:<br>▪ ປັບປຸງສະໜາມຂີ້ເຫຍື້ອ ແລະ ດໍາເນີນການຈັດການຂີ້ເຫຍື້ອ.<br>▪ ປັບປຸງລະບົບ ນໍ້າປະປາທີ່ມີຢູ່ເພື່ອໃຫ້ພຽງພໍກັບຄວາມຕ້ອງການໃນປະຈຸບັນ ແລະ ອານາຄົດ.<br>▪ ວາງແຜນຕິດຕັ້ງລະບົບບໍາບັດນໍ້າເປື້ອນ. | | | | | |
| **UG6A - (ສະຖານທີ່ຖິ້ມຂີ້ເຫຍື້ອ ແລະການຄຸ້ມຄອງຂີ້ເຫຍື້ອແບບລວມສູນ)** | | | | | |
| ພວມດໍາເນີນ - 2026 | ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ໂຍທາທິການ ແລະ ຂົນສົ່ງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ | ຜູ້ໃຫ້ທຶນ | ສູງ | A | 1. ກໍາລັງດໍາເນີນໂຄງການ. |
| **UG6B – (ຄວາມອາດສາມາດຂອງການສະໜອງນໍ້າໃນປັດຈຸບັນ)** | | | | | |
| 2026-2033 | ໂຍທາທິການ ແລະ ຂົນສົ່ງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ | ພາກລັດ ຜູ້ໃຫ້ທຶນ | ສູງ | B | 1. ຍັ້ງຢືນການສະໜອງທຶນສໍາລັບໂຮງງານຜະລິດນໍ້າປະປາແຫ່ງໃໝ່.<br>2. ດໍາເນີນຂັ້ນຕອນການອອກແບບ, ປະເມີນຜົນກະທົບທີ່ອາດຈະເກີດຂຶ້ນ, ປຶກສາຫາລື/ທົບທວນ, ອະນຸມັດ, ແລະ ການກໍ່ສ້າງ ແລະ ມອບສົ່ງ. |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **UG6C - (ໂຮງງານບຳບັດນ້ຳເສຍແຫ່ງໃໝ່/ການວາງແຜນ ແລະການກໍ່ສ້າງ)** | | | | | |
| 2026-2030 | ໂຍທາທິການ ແລະ ຂົນສົ່ງ<br>ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ສາທາລະນະສຸກ | ພາກລັດ<br>ຜູ້ໃຫ້ທຶນ | ສູງ | B | 1. ຮັບປະກັນການສະໜອງທຶນເພື່ອກະກຽມການສຶກສາຄວາມເປັນໄປໄດ້ຂອງໂຮງງານບຳບັດ.<br>2. ດຳເນີນການຜ່ານຂັ້ນຕອນຂອງການອອກແບບ, ປະເມີນຜົນກະທົບທີ່ອາດຈະເກີດຂຶ້ນ, ປຶກສາຫາລື/ທົບທວນ, ອະນຸມັດ, ແລະການຈັດສົ່ງ. (ຂຶ້ນກັບຄວາມເປັນໄປໄດ້ ແລະ ການຮັບປະກັນເງິນທຶນ) |
| **UG7 - ສະໜອງໂຄງລ່າງພື້ນຖານດ້ານການບໍລິການ ແລະ ການຂົນສົ່ງທີ່ຍືນຍົງ ເພື່ອຮອງຮັບການຂະຫຍາຍຕົວໃນອານາຄົດເປັນຕົ້ນ ເສັ້ນທາງຂີ່ລົດຖີບ ແລະ ບໍລິການລົດເມສາທາລະນະ** | | | | | |
| 2023-ongoing | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br><br>ໂຍທາທິການ ແລະ ຂົນສົ່ງ | ພາກລັດ<br>ຜູ້ໃຫ້ທຶນ | ສູງ | B | 1. ແຕ່ງຕັ້ງຜູ້ຊ່ຽວຊານດ້ານການຂົນສົ່ງແບບຍືນຍົງ ເພື່ອກຳນົດປະເພດຂອງໂຄງສ້າງພື້ນຖານການຂົນສົ່ງແບບຍືນຍົງແລະການບໍລິການທີ່ເຫມາະສົມກັບພື້ນທີ່ການຂະຫຍາຍຕົວທີ່ແຕກຕ່າງກັນພາຍໃຕ້ແຜນແມ່ບົດນີ້.<br>2. ເຈລະຈາກັບຜູ້ພັດທະນາ ຫຼື ຜູ້ລົງທຶນ ເພື່ອຮັບປະກັນໃຫ້ພື້ນທີ່ການຂະຫຍາຍຕົວໃຫມ່ມີໂຄງສ້າງພື້ນຖານທີ່ເໝາະສົມ ແລະ ການເຊື່ອມຕໍ່ກັບພື້ນຖານໂຄງລ່າງທີ່ມີຢູ່ແລ້ວ.<br>3. ດຳເນີນການປະມູນເພື່ອໃຫ້ບໍລິການລົດໂດຍສານທ້ອງຖິ່ນໃຫມ່ໃນເຂດການຂະຫຍາຍຕົວ (ຖ້າຖືກກຳນົດວ່າເປັນຜົນປະໂຫຍດ). |

# ແຜນຈັດຕັ້ງປະຕິບັດ

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **UG8 - ຊຸກຍູ້ສົ່ງເສີມໃຫ້ມີການສ້າງອາຊີບ, ການຂົນສົ່ງ ແລະ ການທ່ອງທ່ຽວຢູ່ໃກ້ສະຖານີລົດໄຟວັງວຽງ.** | | | | | |
| ເລີ່ມປີ 2023 ເປັນຕົ້ນໄປ | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ໂຍທາທິການ ແລະ ຂົນສົ່ງ | ພາກລັດ ແລະ ພາກເອກະຊົນ | ຕໍ່າ | B | 1. ຜົນຂະຫຍາຍແຜນແມ່ບົດສະບັບນີ້ ທີ່ກຳນົດຂອບເຂດການຂົນສົ່ງ ແລະ ການທ່ອງທ່ຽວເຂົ້າໃນແຜນພັດທະນາລວມ ແລະ ກົດລະບຽບຂອງລັດ.<br>2. ສ້າງຄຳແນະນຳສຳລັບປະເພດຂອງການພັດທະນາທີ່ກຳນົດຢູ່ໃນເຂດນີ້, ແລະ ກຳນົດໃນບົດຄຳແນະ ນຳຢ່າງຈະແຈ້ງເຖິງໄລຍະຫ່າງລະຫວ່າງການບໍລິການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ທີ່ອາດເປັນຜົນກະທົບທາງລົບຕໍ່ພື້ນທີ່ອ້ອມຂ້າງ (ທີ່ຢູ່ອາໄສ, ໂຮງຮຽນ, ແລະອື່ນໆ). |

ສິ່ງແວດລ້ອມ

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **E1 - ກຳນົດຂອບເຂດພື້ນທີ່ທີ່ສາມາດພັດທະນາໄດ້ໃຫ້ຊັດເຈນ ເພື່ອສົ່ງເສີມການປົກປັກຮັກສາຫົວທັດທຳມະຊາດຂອງຕົວເມືອງ (ລວມເຖິງພູຫີນປູນ, ເຂດປ່າໄມ້, ພື້ນທີ່ກະສິກຳ ແລະ ສັນພູ).** | | | | | |
| 2023-2024 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>ກະສິກຳ ແລະ ປ່າໄມ້<br>ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ<br>ບ້ານ | ພາກລັດ | ຕ່ຳ | A | 1. ຈັດຕັ້ງປະຕິບັດແຜນແມ່ບົດສະບັບນີ້, ເຊິ່ງກຳນົດຂອບເຂດທີ່ຊັດເຈນສຳລັບການພັດທະນາ/ການຂະຫຍາຍຕົວໃນອະນາຄົດ, ເຂົ້າໄປໃນລະບຽບການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດ. |
| **E2 - ຮັບປະກັນວ່າກິດຈະກຳການທ່ອງທ່ຽວຢູ່ບໍລິເວນອ້ອມຮອບເຂດທຳມະຊາດ ຈະບໍ່ສົ່ງຜົນກະທົບທາງດ້ານລົບຕໍ່ເຂດດັ່ງກ່າວ** | | | | | |
| 2023-2024 | ຕຳຫຼວດທ່ອງທ່ຽວ<br>ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>ກະສິກຳ ແລະ ປ່າໄມ້<br>ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ພາກລັດ | ປານກາງ | A | 1. ທົບທວນຄືນວິທີການດຳເນີນກິດຈະກຳການທ່ອງທ່ຽວຢູ່ອ້ອມຮອບທຳມະຊາດຂອງເມືອງ. ແຕ່ງຕັ້ງຜູ້ຊ່ຽວຊານ/ທີ່ປຶກສາ ເພື່ອເຮັດການກວດກາທົບທວນຄືນນີ້.<br>2. ກໍລະນີທີ່ພົບເຫັນວ່າມີກິດຈະກຳທີ່ມີຜົນກະທົບທາງລົບ, ໃຫ້ສົມທົບກັບຜູ້ປະກອບການດ້ານການທ່ອງທ່ຽວ ເພື່ອດັດແປງ ຫຼື ຢຸດກິດຈະກຳທັງໝົດເພື່ອຈຳກັດຜົນກະທົບ. |

| ໄລຍະເວລາ | ອົງການທີ່ ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າ ໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **E3 - ດໍາເນີນການສຶກສາທາງດ້ານວິຊາການກ່ຽວກັບຄຸນຄ່າທາງທໍາມະຊາດ, ທິວທັດຂອງພູຫີນປູນ ແລະ ສາຍນໍ້າຊອງ ເພື່ອສົ່ງເສີມການອະນຸລັກ ແລະ ປົກປັກຮັກສາໃຫ້ມີຄວາມເໝາະສົມພາຍໃຕ້ນິຕິກໍາທີ່ກ່ຽວຂ້ອງຂອງ ສປປ ລາວ (ໂດຍສະເພາະເຂດທີ່ຍັງບໍ່ມີນິຕິກໍາຄຸ້ມຄອງທີ່ຊັດເຈນ)** | | | | | |
| 2024-2025 | ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ<br>ກະສິກໍາ ແລະ ປ່າໄມ້<br>ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ | ຜູ້ໃຫ້ທຶນ | ຕໍ່າ - ປານກາງ | B | 1. ສໍາຫຼວດ ແລະ ເກັບກໍາຂໍ້ມູນດ້ານເຕັກນິກທີ່ຈໍາເປັນກ່ຽວກັບຄຸນຄ່າທາງທໍາມະຊາດ ແລະ ທິວທັດ ຮ່ວມກັບຜູ້ຊ່ຽວຊານ/ທີ່ປຶກສາ.<br>2. ທົບທວນຂອບເຂດຂອງການປົກປ້ອງທາງດ້ານກົດໝາຍທີ່ມີຢູ່ແລ້ວຂອງຄຸນຄ່າທາງທໍາມະຊາດ ແລະ ທິວທັດ ແລະ ປະເມີນຜົນກະທົບຂອງເຂດທີ່ນໍາສະເໜີເຂົ້າເພີ່ມ.<br>3. ຫາລືກັບພາກສ່ວນກ່ຽວຂ້ອງ.<br>4. ພິຈາລະນາ ແລະ ກໍານົດເຂດທີ່ມີລັກສະນະພິເສດ ເພື່ອໃຫ້ໄດ້ຮັບການປົກປ້ອງ ພາຍໃຕ້ກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ |
| **E4 - ປົກປັກຮັກສາ ແລະ ປັບປຸງຄຸນນະພາບຂອງນໍ້າຊອງ ແລະ ສາຍນໍ້າສາຂາອື່ນໆພາຍໃນພື້ນທີ່ແຜນແມ່ບົດ.** | | | | | |
| 2023 – ສືບຕໍ່ | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ<br>ກະສິກໍາ ແລະ ປ່າໄມ້<br>ໂຍທາທິການ ແລະ ຂົນສົ່ງ | ພາກລັດ, ຜູ້ໃຫ້ທຶນ | ປານກາງ | B | 1. ຈັດຫາແຫຼ່ງທຶນ ແລະ ແຕ່ງຕັ້ງຜູ້ຊ່ຽວຊານ/ທີ່ປຶກສາ ເພື່ອສຶກສາສະພາບຂອງແມ່ນໍ້າຊອງ ແລະ ສາຂາຕ່າງໆ ແລະ ກໍານົດການວິທີແກ້ໄຂບັນຫາ ເພື່ອປົກປັກຮັກສາແມ່ນໍ້າຊອງ ແລະ ປັບປຸງສະພາບຂອງແມ່ນໍ້າໃຫ້ດີຂຶ້ນ.<br>2. ທົບທວນຄືນຜົນຂອງການສຶກສາ ແລະ ປະຕິບັດຄໍາແນະນໍາ (ຜ່ານໂຄງການແຍກຕ່າງຫາກ). |
| **E5 - ຈັດຕັ້ງປະຕິບັດຕາມຂໍ້ແນະນໍາຂອງການອອກແບບ ແລະ ການພັດທະນາທີ່ຄວບຄຸມຄວາມສູງຂອງອາຄານ ແລະ ຮູບແບບຂອງການພັດທະນາໃໝ່ ທີ່ກໍານົດປະເພດການພັດທະນາໃຫ້ມີຄວາມເໝາະສົມແຕ່ລະເຂດ** | | | | | |
| 2023-2024 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ | ພາກລັດ | ຕໍ່າ | A | 1. ສັງລວມເອົາບົດແນະນໍາການອອກແບບ ແລະ ການພັດທະນາ |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບຸລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | ໂຍທາທິການ ແລະ ຂົນສົ່ງ | | | | ທີ່ທີມງານໂຄງການໄດ້ກະກຽມເຂົ້າໃນລະບຽບການຂອງລັດ.<br>2. ຮັບປະກັນໃຫ້ພະນັກງານຂອງລັດໄດ້ຮັບການຝຶກອົບຮົມຢ່າງພຽງພໍໃນການນໍາໃຊ້ບົດແນະນໍາໃຫ້ເປັນສ່ວນໜຶ່ງຂອງການປະເມີນໂຄງການພັດທະນາ. |
| **E6 –ຈັດຕັ້ງປະຕິບັດຕາມຂໍ້ແນະນໍາຂອງການອອກແບບ ແລະ ການພັດທະນາ ເພື່ອປົກປັກຮັກສາທັດສະນີຍະພາບຕາມບໍລິເວນອ້ອມພູທາງທິດຕາເວັນຕົກ ແລະ ທາງທິດເໜືອ.** | | | | | |
| 2023/ 2024 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>DAO | ພາກລັດ | ຕໍ່າ | A | 1. ເອົາບົດແນະນໍາການພັດທະນາສໍາລັບພາກເອກະຊົນໃນເຂດພື້ນທີ່ນອກ UGB ທີ່ໄດ້ກະກຽມໂດຍທີມງານໂຄງການ ເພື່ອກໍານົດເຂົ້າໃນລະບຽບການຄຸ້ມຄອງທີ່ກ່ຽວຂ້ອງ.<br>2. ຮັບປະກັນໃຫ້ພະນັກງານລັດຖະກອນໄດ້ຮັບການຝຶກອົບຮົມຢ່າງພຽງພໍໃນການນໍາໃຊ້ບົດແນະນໍາໃຫ້ເປັນສ່ວນໜຶ່ງຂອງການປະເມີນໂຄງການພັດທະນາ. |
| **E7 - ວາງລະບຽບຄຸ້ມຄອງກິດຈະກໍາການທ່ອງທ່ຽວ ແລະ ການບັນເທີງທີ່ສົ່ງຜົນກະທົບທາງອາກາດ, ທາງນໍ້າ ແລະ ມົນລະພິດທາງສຽງ** | | | | | |
| 2023 - ສືບຕໍ່ | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ<br>ໂຍທາທິການ ແລະ ຂົນສົ່ງ<br>ຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ | ພາກລັດ, ຜູ້ໃຫ້ທຶນ | ຕໍ່າ -ປານກາງ | A | 1. ກວດກາຄືນຄວາມເໝາະສົມຂອງບັນດາລະບຽບການທີ່ມີຢູ່ແລ້ວກ່ຽວກັບການຄຸ້ມຄອງບັນຫາມົນລະພິດທາງນໍ້າຢູ່ເມືອງວັງວຽງ ແລະ ເຂດອ້ອມຂ້າງ.<br>2. ຖ້າເໝາະສົມ, ໃຫ້ຈັດຫາທຶນມາເພີ່ມ ແລະ/ຫຼື ຊອກຫາແຫຼ່ງທຶນເພີ່ມເຕີມເພື່ອປັບປຸງການບັງຄັບໃຊ້ກົດລະບຽບນໍ້າ.<br>3. ຖ້າລະບຽບການທີ່ມີຢູ່ໃນປັດຈຸບັນ ບໍ່ເໝາະສົມ ຫຼື ບໍ່ສອດຄ່ອງ, ໃຫ້ແກ້ໄຂລະບຽບການດັ່ງກ່າວ |

| ໄລຍະເວລາ | ອົງການທີ່ ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າ ໃຊ້ຈ່າຍ | ບຸລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | | | | ພາຍຫຼັງປຶກສາຫາລືກັບພາກສ່ວນກ່ຽວຂ້ອງ.<br>4. ບັນຈຸເອົາບົດແນະນຳການດຳເນີນງານທີ່ໄດ້ກະກຽມໂດຍທີມງານໂຄງການ (ເພື່ອແກ້ໄຂບັນຫາສຽງລົບກວນ, ອາກາດ ແລະ ແສງສະຫວ່າງ ແລະ ຄວາມໄວຂອງພາຫະນະ/ເຮືອ) ເຂົ້າໃນລະບຽບການຄຸ້ມຄອງທີ່ກ່ຽວຂ້ອງ, ພາຍຫຼັງປຶກສາຫາລືກັບພາກສ່ວນກ່ຽວຂ້ອງ.<br>5. ຮັບປະກັນໃຫ້ອຳນາດການປົກຄອງປະຕິບັດທຸກລະບຽບການຕໍ່ກັບບັນຫາອາກາດ, ນໍ້າ, ມົນລະພິດທາງສຽງ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ.<br>6. ປະສານງານຮ່ວມກັບຜູ້ປະກອບການ ແລະ ເຈົ້າຂອງເຮືອຫາງຍາວເພື່ອປ່ຽນມໍເຕີເຮືອເປັນມໍເຕີໄຟຟ້າ.<br><br>*ອ້າງອີງເຖິງຂໍ້ແນະນຳການດຳເນີນງານທີ່ປະຕິບັດຕາມແຜນປະຕິບັດງານນີ້.* |
| **E8 - ດຳເນີນການຕິດຕາມຄຸນນະພາບອາກາດ, ທາງນໍ້າ ແລະ ມົນລະພິດທາງສຽງຢ່າງສະໝ່ຳສະເໝີ** | | | | | |
| 2023 - ສືບຕໍ່ | ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>DAO | ພາກລັດ, ຜູ້ໃຫ້ທຶນ | ປານກາງ | B | 1. ຊອກຫາທຶນ ຫຼື ນຳໃຊ້ຊັບພະຍາກອນທີ່ມີຢູ່ ເພື່ອຂະຫຍາຍການຕິດຕາມກວດກາຄຸນນະພາບອາກາດ ແລະ ມົນລະພິດທາງສຽງ, ລວມທັງຄຸນນະພາບນໍ້າ.<br>2. ອອກແບບລະບົບການຕິດຕາມກວດກາ ເພື່ອຮັບປະກັນວ່າຈະສາມາດຈັດຕັ້ງປະຕິບັດໄດ້.<br>3. ນຳໃຊ້ຜົນການຕິດຕາມກວດກາເພື່ອແຈ້ງຊອກຫາທາງອອກທີ່ເປັນໄປໄດ້. |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **E9 - ດຳເນີນການສຶກສາສຳຫຼວດ ເພື່ອກຳນົດຂອບເຂດພື້ນທີ່ມໍຣະດົກທາງທຳມະຊາດ ແລະ ວັດທະນະທຳຢູ່ຂອບເຂດຕົວເມືອງ ແລະ ບໍລິເວນອ້ອມຮອບ ໂດຍສະເພາະເຂດທີ່ຍັງບໍ່ມີນິຕິກຳຄຸ້ມຄອງທີ່ຊັດເຈນ ເພື່ອໃຫ້ມີນິຕິກຳໃນການປົກປັກຮັກສາເຂດພື້ນທີ່ດັ່ງກ່າວ.** | | | | | |
| 2024/2025 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂຍທາທິການ ແລະ ຂົນສົ່ງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອຳນາດການປົກຄອງບ້ານ | ພາກລັດ, ຜູ້ໃຫ້ທຶນ | ຕໍ່າ | B | 1. ແຕ່ງຕັ້ງຜູ້ຊ່ຽວຊານ/ທີ່ປຶກສາ ຫຼື ພະນັກງານລັດຖະກອນ ເພື່ອກວດກາຄືນສະຖານທີ່ມໍລະດົກທາງທຳມະຊາດ ແລະ ວັດທະນະທຳ ກ່ຽວກັບນິຕິກຳໃນການຄຸ້ມຄອງ<br>2. ກຳນົດສະຖານທີ່ ຫຼື ພື້ນທີ່ເຫມາະສົມທີ່ຄວນມີການປົກປ້ອງ.<br>3. ດຳເນີນການປຶກສາຫາລືກັບຜູ້ມີສ່ວນຮ່ວມ.<br>4. ຈັດຕັ້ງປະຕິບັດການສະເໜີປົກປ້ອງພາຍໃຕ້ກົດໝາຍທີ່ກ່ຽວຂ້ອງ. |
| **E10 - ຮັບປະກັນວ່າການອອກແບບຢູ່ບໍລິເວນອ້ອມຮອບຖໍ້າ ເປັນຕົ້ນສິ່ງອຳນວຍຄວາມສະດວກ ແລະ ປ້າຍຊີ້ບອກຕ່າງໆໃຫ້ມີຄວາມເໝາະສົມ ແລະ ກົມກືນກັບທຳມະຊາດ** | | | | | |
| 2023-ສືບຕໍ່ | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂຍທາທິການ ແລະ ຂົນສົ່ງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອຳນາດການປົກຄອງບ້ານ DAO, | Public Sector Donors | LOW-MEDIUM | B | 1. ກວດກາຄືນປ້າຍ ແລະ ໂຄງສ້າງທັງໝົດໃນບໍລິເວນຖໍ້າທີ່ວເຂດໃນ ແລະ ອ້ອມແອ້ມວັງວຽງ.<br>2. ໃນກໍລະນີທີ່ປ້າຍ ແລະໂຄງສ້າງທີ່ມີຢູ່ແລ້ວບໍ່ເໝາະສົມ/ຕອບສະໜອງໄດ້ຢ່າງເໝາະສົມກັບສະຖານທີ່ຖໍ້າ ແລະ ສະພາບແວດລ້ອມອ້ອມຂ້າງ, ໃຫ້ເຮັດວຽກຮ່ວມກັບຜູ້ປະກອບການທ້ອງຖິ່ນເພື່ອແກ້ໄຂ.<br>3. ຊອກຫາການຊ່ວຍເຫຼືອຈາກຜູ້ໃຫ້ທຶນ ເພື່ອສະໜອງທຶນໃຫ້ກັບການປ່ຽນແປງທີ່ໃຫ່ຍ. |

**ການພັດທະນາການທ່ອງທ່ຽວ**

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TD1 - ສ້າງ/ປັບປຸງແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວເມືອງວັງວຽງ ເພື່ອເປັນທິດທາງໃນການພັດທະນາໃນອານາຄົດ.** | | | | | |
| 2024 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ຫ້ອງການ ຖວທ ເມືອງ ຮ່ວມກັບ ກະຊວງ ຖວທ ແລະ ພາກທຸລະກິດ | ADB TIIGP2 ຮອດ ທັນວາ 2025 | ຕໍ່າ | A | 1. ທົບທວນຄືນການເປັນສະມາຊິກ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍ ທາງການທ່ອງທ່ຽວວັງວຽງ<br>2. ສະເໜີແຜນງານທີ່ຈະແຈ້ງ ແລະ ວຽກງານຕິດພັນກັບແຜນແມ່ບົດນີ້ ທີ່ຕ້ອງການໃຫ້ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງ ທ່ຽວວັງວຽງຈັດຕັ້ງປະຕິບັດ.<br>3. ສະໜອງການສະໜັບສະໜູນດ້ານວິຊາການກັບເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງ ທ່ຽວວັງວຽງ ເພື່ອສະໜັບສະໜູນບົດບາດຜູ້ນໍາຂອງເຂົາເຈົ້າ. |
| **TD2 – ນໍາໃຊ້ມາດຕະຖານເມືອງທ່ອງທ່ຽວສະອາດຂອງອາຊຽນເພື່ອເປັນແນວທາງໃນການຍົກລະດັບສິ່ງອໍານວຍຄວາມສະດວກ ແລະ ບໍລິການຂອງຕົວເມືອງ ແລະ ກະກຽມສະເໜີຮັບລາງວັນເມືອງທ່ອງທ່ຽວສະອາດອາຊຽນພາຍໃນປີ 2026** | | | | | |
| 2023-2025 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ຫ້ອງການ ຖວທ ເມືອງ ຮ່ວມກັບ ກະຊວງ ຖວທ | ADB TIIGP2 ຮອດ ທັນວາ 2025 | ປານກາງ-ສູງ | A | 1. ສໍາເລັດການປະເມີນພື້ນຖານໂຄງລ່າງ ແລະ ຄວາມຕ້ອງການການບໍລິການໃຫ້ໄດ້ຕາມມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ.<br>2. ສໍາເລັດແຜນການປະຕິບັດ/ການຈັດຊື້ເພື່ອຕອບສະໜອງຄວາມຕ້ອງການ. |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | | | | 3. ການສະໜັບສະໜູນທຶນຂອງໂຄງການ ADB TIIGP2.<br>4. ສະເໜີຮັບລາງວັນມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ. |
| **TD3 – ດຶງດູດການລົງທຶນດ້ານການທ່ອງທ່ຽວທີ່ມີຄຸນນະພາບໃຫ້ເຂົ້າມາລົງທຶນຢູ່ເມືອງວັງວຽງ ໂດຍມີເງື່ອນໄຂທີ່ຊັດເຈນໃນການປະເມີນບົດສະເໜີໂຄງການລົງທຶນ** | | | | | |
| 2023-2032 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ແລະ ຫ້ອງການ ຖວທ ເມືອງ ຮ່ວມກັບເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວວັງວຽງ ແລະ ຫ້ອງການແຜນການ ແລະ ການລົງທຶນ ເມືອງ ແລະ ກະຊວງ ຖວທ | ຮ່ວມມືກັບຫຼາຍອົງການ, ບົດບາດຂອງຜູ້ໃຫ້ທຶນແມ່ນເພື່ອສະໜອງການຊ່ວຍເຫຼືອດ້ານວິຊາການກັບການພັດທະນາ ແລະການນໍາໃຊ້ເງື່ອນໄຂ | ຕໍ່າ - ປານກາງ | B | 1. ກໍານົດ ແລະຈັດລໍາດັບຄວາມສໍາຄັນຂອງຄວາມຕ້ອງການການລົງທຶນສໍາລັບການພັດທະນາການທ່ອງທ່ຽວຕາມສະຖານທີ່ (ຕົວຢ່າງ: ທິດເໜືອ ແມ່ນສໍາລັບການລົງທຶນດ້ານກະສິກໍາ, ພາກໃຕ້ ແລະ ຕາເວັນອອກສໍາລັບການບັນເທີງ ແລະ ວັດທະນະທໍາ ຕາເວັນຕົກສໍາລັບກິດຈະກໍາທໍາມະຊາດ ແລະ ການຜະຈົນໄພ).<br>2. ປຶກສາຫາລືກັບຊຸມຊົນກ່ຽວກັບການລົງທຶນທີ່ມີທ່າແຮງ ແລະ ການມີສ່ວນຮ່ວມຂອງເຂົາເຈົ້າ.<br>3. ກໍານົດທີ່ດິນທີ່ມີທ່າແຮງສໍາລັບການລົງທຶນ.<br>4. ສ້າງມາດຖານການປະເມີນຜົນການລົງທຶນສະເພາະ.<br>5. ສ້າງຄວາມຮັບຮູ້ກ່ຽວກັບມາດຖານກັບຊຸມຊົນ ແລະ ອໍານາດການປົກຄອງທ້ອງຖິ່ນ. |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TD4 – ປັບປຸງສະຖານທີ່ທ່ອງທ່ຽວ ແລະ ການບໍລິການ ໂດຍສະເພາະຢູ່ເຂດພື້ນທີ່ສາທາລະນະໃນແຕ່ລະວັນ.** | | | | | |
| 2024-2032 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ໂຍທາທິການ ແລະ ຂົນສົ່ງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ DAO | ADB ແລະ ຜູ້ໃຫ້ທຶນອື່ນໆ ກັບພາກເອກະຊົນ | ປານກາງ - ສູງ | A | 1. ກຳນົດສະຖານທີ່ທ່ອງທ່ຽວ, ກິດຈະກຳ ແລະ ສິ່ງອຳນວຍຄວາມສະດວກເປັນທີ່ຄວນຈະປັບປຸງ ລວມທັງການເພີ່ມຄວາມປອດໄພ ເພື່ອຍົກລະດັບປະສົບການຂອງນັກທ່ອງທ່ຽວ.<br>2. ພິຈາລະນາຈຸດຊົມວິວພູ, ຂີ່ເຮືອ/ເຮືອກາຍັກຢູ່ນ້ຳຊອງ, ຂີ່ລົດ, ຊົມຖ້ຳ, ປີນຜາ, ຍ່າງຊົມນ້ຳຕົກ ຕາດເປັນລຳດັບທຳອິດ.<br>3. ຈັດສັນດິນຂອງລັດເພື່ອເປັນບ່ອນສາທາລະນະ (ເຊັ່ນ: ທາງຍ່າງແຄມແມ່ນ້ຳ, ສວນສາທາລະນະທີ່ສາມາດນຳໃຊ້ໄດ້ແບບບໍ່ເສຍຄ່າ).<br>4. ປັບປຸງເຮືອຫາງຍາວທີ່ມີສຽງດັງ ແລະຫັນມາເປັນມໍເຕີໄຟຟ້າໃນການເດີນທາງຕາມແມ່ນ້ຳຊອງ. |
| **TD5 –** ຈັດຕັ້ງປະຕິບັດມາດຕະຖານການທ່ອງທ່ຽວອາຊຽນ ເພື່ອຍົກລະດັບຄຸນນະພາບການບໍລິການຢູ່ສະຖານທີ່ພັກ, ຮ້ານອາຫານ, ສະປາ, ຫ້ອງປະຊຸມ ແລະ ສະຖານທີ່ຈັດງານ | | | | | |
| 2023-2032 | ນຳພາໂດຍຄະນະບໍລິຫານງານ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ເມືອງວັງວຽງ ຮ່ວມມືກັບ ຖວທ ເມືອງ ແລະ ສະໜັບສະໜູນໂດຍກອງເລຂາມາດຕະຖານທ່ອງທ່ຽວອາຊຽນຂັ້ນສູນກາງ. ຄະນະກຳມະການຍັ້ງຢືນມາດຕະຖານອາຊຽນໄດ້ | ADB TIIGP2 ເຖິງທັນວາ 2025, ຜູ້ໃຫ້ທຶນອື່ນໆ ພາຍຫຼັງ 2025 | ຕ່ຳ - ປານກາງ | B | 1. ກຳນົດຕົວຢ່າງທີ່ດີທີ່ສຸດຂອງວັງວຽງສຳລັບທີ່ພັກ, ຮ້ານອາຫານ, ສະປາ ແລະສະຖານທີ່ຈັດກອງປະຊຸມ ເພື່ອການປັບປຸງ.<br>2. ຊ່ວຍບັນດາຫົວໜ່ວຍທຸລະກິດເພື່ອສະຫມັກເອົາມາດຕະຖານການທ່ອງທ່ຽວອາຊຽນ.<br>3. ຄົ້ນຄວ້າທາງເລືອກໃນການສະໜັບສະໜູນທຸລະກິດຂະໜາດນ້ອຍ ແລະ ກາງ ເພື່ອຍົກລະດັບສິ່ງອຳນວຍຄວາມ |

| ໄລຍະ ເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບ ຄ່າໃຊ້ ຈ່າຍ | ບູລິມະ ສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | ສ້າງຕັ້ງຂຶ້ນຢູ່ວັງວຽງແລ້ວ, ແຕ່ຄວນຈະດໍາເນີນຢູ່ພາຍໃຕ້ການຊີ້ນໍາຂອງ DMN ວັງວຽງ. | | | | ສະດວກ ແລະ ມາດຕະຖານການບໍລິການໃຫ້ໄດ້ຕາມມາດຕະຖານອາຊຽນ. |
| **TD6 - ສືບຕໍ່ລົງທຶນໃນການຝຶກອົບຮົບໃຫ້ພະນັກງານບໍລິການໃນຂະແໜງການທ່ອງທ່ຽວ ໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດ ແລະ ການຂະຫຍາຍຕົວຂອງຂະແໜງການ ເປັນຕົ້ນ: ສະຖານທີ່ພັກແຮມທີ່ສ້າງຂຶ້ນໃໝ່, ກິດຈະກໍາການທ່ອງທ່ຽວໃໝ່, ສະຖານທີ່ທ່ອງທ່ຽວໃໝ່ ແລະ ອື່ນໆ.** | | | | | |
| 2023 - 2032 | ປະສານງານຜ່ານ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວວັງວຽງ ດ້ວຍການສະໜັບສະໜູນດ້ານວິຊາການ/ການຈັດຕັ້ງ ຈາກ ຖວທ ເມືອງ ແລະ ກະຊວງ ຖວທ | ຫຼາຍອົງການ, ເອກະຊົນ, ຜູ້ໃຫ້ທຶນ (Lux Dev, ADB, ອື່ນໆ) | ປານກາງ | A | 1. ປະສານງານກັບສະຖາບັນການສຶກສາການທ່ອງທ່ຽວ ແລະ ກະຊວງ ຖວທ ເພື່ອກໍານົດຈໍານວນຕໍາແໜ່ງວຽກ ແລະ ທັກສະທີ່ຈໍາເປັນສໍາລັບອຸດສາຫະກໍາການທ່ອງທ່ຽວໃນວັງວຽງໃນໄລຍະສັ້ນ ແລະ ກາງ.<br>2. ກໍານົດ ແລະ ຈັດລໍາດັບຄວາມສໍາຄັນຄວາມຕ້ອງການການຝຶກອົບຮົມ.<br>3. ສືບຕໍ່ຝຶກອົບຮົມຈາມຫຼັກສູດທີ່ມີແລ້ວ ແລະ ສ້າງຫຼັກສູດໃໝ່ຢູ່ສະຖາບັນການສຶກສາທ່ອງທ່ຽວ ເພື່ອໃຫ້ສາມາດສືບຕໍ່ການຝຶກອົບຮົມ ແລະ ປັບປຸງທັກສະໃນໄລຍະສັ້ນຫາ ກາງ.<br>4. ສື່ສານ ແລະ ສົ່ງເສີມໃຫ້ຜູ້ປະກອບການເຂົ້າໃຈເຖິງຄວາມຕ້ອງການສໍາລັບການຝຶກອົບຮົມພະນັກງານຢ່າງຕໍ່ເນື່ອງ.<br>5. ສະໜັບສະໜູນທຸລະກິດຂະໜາດນ້ອຍ ແລະ ເປີດໃໝ່ໃນການຈັດຝຶກອົບຮົມພາຍໃນ. |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TD7 – ສົ່ງເສີມຜະລິດຕະພັນຂອງທ້ອງຖິ່ນສະໜອງໃຫ້ແກ່ການທ່ອງທ່ຽວ ໂດຍເນັ້ນໃສ່ຜະລິດຕະພັນທີ່ມີຢູ່ແລ້ວ ເຊັ່ນ: ການເຮັດນາ, ການປູກ ໝາກໄມ້ ແລະ ການປູກຝັງອື່ນໆ** | | | | | |
| 2024-2030 | ປະສານງານຜ່ານເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວວັງວຽງ ດ້ວຍການສະໜັບສະໜູນດ້ານວິຊາການ/ການຈັດຕັ້ງ ຈາກ ຖວທ ເມືອງ ແລະ ກະຊວງ ຖວທ | ຫຼາຍອົງການ, ເອກະຊົນ, ຜູ້ໃຫ້ທຶນ | ຕ່ຳ - ປານກາງ | B | 1. ກຳນົດ ແລະ ເລືອກເອົາ 3-5 ກິດຈະກຳຫຼັກໆ ຂອງຊຸມຊົນທີ່ມີຢູ່ແລ້ວຕາມເຂດຕ່າງໆ ເຊັ່ນ: ສວນທຸລຽນ ແລະ ສວນໝາກກ້ຽງ, ຜູ້ຜະລິດເຄື່ອງຫັດຖະກຳ.<br>2. ປະສານງານ ແລະ ຮ່ວມມືກັບພາກເອກະຊົນ (ຜູ້ໃຫ້ບໍລິການທີ່ພັກ ແລະ ບໍລິສັດທ່ອງທ່ຽວ) ແລະ ອຳນາດການປົກຄອງທ້ອງຖິ່ນ (ບ້ານ) ເພື່ອປັບປຸງຄຸນນະພາບການບໍລິການຂອງຜູ້ສະ ໜອງການທ່ອງທ່ຽວ ແລະ ຂະຫຍາຍກິດຈະກຳເພື່ອສ້າງປະສົບການທີ່ເປັນເອກະລັກ.<br>3. ຈັດກອງປະຊຸມເພື່ອປູກຈິດສຳນຶກກ່ຽວກັບຄວາມຕ້ອງການຂອງນັກທ່ອງທ່ຽວ, ພ້ອມດຽວກັນກັບການປົກປັກຮັກສາມໍລະດົກວັດທະນະທຳ ແລະ ສິ່ງແວດລ້ອມ. |
| **TD8 – ພັດທະນາເສັ້ນທາງຍ່າງ/ ເສັ້ນທາງຍ່າງປ່າ ຕາມເສັ້ນທາງວົງແຫວນເບື້ອງຕາເວັນຕົກ.** | | | | | |
| 2026-2030 | ປະສານງານຜ່ານ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວວັງວຽງ ດ້ວຍການສະໜັບສະໜູນດ້ານວິຊາການ/ການຈັດຕັ້ງ ຈາກ ຖວທ ເມືອງ ແລະ ກະຊວງ ຖວທ | ຫຼາຍອົງການ, ຊຸມຊົນ, ເອກະຊົນ, ຜູ້ໃຫ້ທຶນ | ຕ່ຳ - ປານກາງ | B | 1. ຜູ້ປະກອບການທ່ອງທ່ຽວ ແລະ ອຳນາດການປົກຄອງທ້ອງຖິ່ນ ສຳຫຼວດ ແລະ ຄັດເລືອກເສັ້ນທາງທີ່ມີທ່າແຮງສູງໃນການຍ່າງມື້ໜຶ່ງ ແລະ ຫຼາຍມື້.<br>2. ກຳນົດກົນໄກການຄຸ້ມຄອງເສັ້ນທາງເພື່ອຫຼີກລ່ຽງການ |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | | | | ຜູກຂາດ ແລະ ຂໍ້ຂັດແຍ່ງທາງຜົນປະໂຫຍດ.<br>3. ຮັບປະກັນການສະໜອງທຶນ ຫຼື ຮ່ວມມືກັບພາກເອກະຊົນ ເພື່ອພັດທະນາເສັ້ນທາງ ເພື່ອຮັບປະກັນຄວາມປອດໄພຂອງຜູ້ໃຊ້. |
| **TD9 - ຍົກລະດັບຄຸນນະພາບ ແລະ ຄວາມທົນທານຂອງເສັ້ນທາງຍ່າງໄປຫາຈຸດຊົມວິວທີ່ໂດດເດັ່ນທີ່ສຸດໃນປະເທດລາວ** | | | | | |
| 2024-2028 | ປະສານງານຜ່ານ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວວັງວຽງ ດ້ວຍການສະໜັບສະໜູນດ້ານວິຊາການ/ການຈັດຕັ້ງ ຈາກ ຖວທ ເມືອງ ແລະ ກະຊວງ ຖວທ | ຫຼາຍອົງການ, ຊຸມຊົນ, ເອກະຊົນ, ຜູ້ໃຫ້ທຶນ | ປານກາງ | A | 1. ຄັດເລືອກ 3 ຈຸດຊົມວິວ ທີ່ເປັນທີ່ນິຍົມທີ່ສຸດ ເພື່ອການປັບປຸງ ແລະ ຍົກລະດັບ.<br>2. ເຮັດວຽກຮ່ວມກັບຜູ້ຊ່ຽວຊານສະເພາະດ້ານ ເພື່ອດໍາເນີນການສໍາຫຼວດ ເພື່ອກໍານົດ ແລະ ໝາຍສະຖານທີ່ສໍາລັບການປັບປຸງ ແລະ ຍົກລະດັບ.<br>3. ຈັດຫາທຶນ ຫຼື ຮ່ວມມືກັບພາກເອກະຊົນ ແລະ/ຫຼື ຜູ້ໃຫ້ທຶນໃນການປັບປຸງເສັ້ນທາງຂຶ້ນສູ່ຈຸດຊົມວິວ.<br>4. ຮັບປະກັນການປັບປຸງໃຫ້ເໝາະສົມກັບມາດຕະຖານຄວາມປອດໄພສາກົນ ແລະ ວັດສະດຸທີ່ໃຊ້ແມ່ນມີຄວາມຍືນຍົງ ແລະ ທົນທານ.<br>5. ກໍານົດ ແລະ ສະໜອງລາຍການຄຸ້ມຄອງ ເພື່ອຕິດຕາມກວດກາການບໍາລຸງຮັກສາແຕ່ລະໄລຍະ. |

| ໄລຍະ ເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບ ຄ່າໃຊ້ ຈ່າຍ | ບູລິມະ ສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TD10 – ໂຄສະນາສົ່ງເສີມກິດຈະກຳການຕະຫຼາດ** “X-trail challenge” **ໃຫ້ນັກທ່ອງທ່ຽວຕ່າງປະເທດ** | | | | | |
| 2024-2026 | ພາກທຸລະກິດເປັນເຈົ້າການ ໂດຍມີກັບຄະນະບໍລິຫານ ງານເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດ ໝາຍປາຍທາງ ການທ່ອງທ່ຽວວັງວຽງ ( ພາກລັດ ແລະ ສະມາຊິກ ພາກເອກະຊົນ) | ພາກເອະຊົນ | ຕ່ຳ | B | 1. ສ້າງຕັ້ງ/ຂຶ້ນທະບຽນລາຍການ ກິລາ X-Race ວັງວຽງໃຫ້ ເປັນລາຍການແຂ່ງຂັນລະດັບ ສາກົນ.<br>2. ສ້າງຕັ້ງຄະນະຈັດຕັ້ງເພື່ອຈັດ ງານ, ການສື່ສານ, ການສະໜັບສະໜູນ ແລະ ອື່ນໆ<br>3. ຈັດຫາຜູ້ສະຫນອງທຶນສໍາລັບ ກິດຈະກໍາ ແລະ ການຕະຫຼາດ.<br>4. ສໍາຫຼວດ ເສັ້ນທາງ (ກັບພາກ ເອກະຊົນ ແລະ ຜູ້ຊ່ຽວຊານ ສະເພາະດ້ານ). |
| **TD11 - ປັບປຸງ ແລະ ຂະຫຍາຍເສັ້ນທາງຂີ່ລົດຖີບ ເພື່ອໃຫ້ວັງວຽງກາຍເປັນເມືອງທີ່ມີເສັ້ນທາງຂີ່ລົດຖີບ ແບບພະຈົນໄພທີ່ດີທີ່ສຸດໃນລາວ** | | | | | |
| 2025-2032 | ປະສານງານຜ່ານ ເຄືອຂ່າຍ ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງ ການທ່ອງທ່ຽວວັງວຽງ ດ້ວຍການສະໜັບສະໜູນ ດ້ານວິຊາການ/ການຈັດຕັ້ງ ຈາກ ຖວທ ເມືອງ ແລະ ກະຊວງ ຖວທ | ຫຼາຍອົງການ, ຊຸມຊົນ, ເອກະຊົນ, ຜູ້ໃຫ້ທຶນ | ປານກາງ - ສູງ | B | 1. ສໍາຫຼວດເສັ້ນທາງທີ່ມີຢູ່ແລ້ວ<br>2. ສໍາຫຼວດທ່າແຮງຂະຫຍາຍ ເສັ້ນທາງໄປສູ່ທິດຕາເວັນຕົກ ແລະ ຕາເວັນອອກ.<br>3. ສ້າງຮ່ວມມືພາກລັດ/ເອກະຊົນ ເພື່ອລະດົມທຶນເຂົ້າໃນການ ປັບປຸງ ແລະ ພັດທະນາ.<br>4. ທົດສອບເສັ້ນທາງ ເພື່ອ ຮັບປະກັນຄວາມປອດໄພ ແລະ ການຕອບຮັບຂອງຕະຫຼາດ ແລະ ປັບປຸງເສັ້ນທາງ ໂດຍ ອີງໃສ່ຜົນການ ການທົດສອບ ເສັ້ນທາງ.<br>5. ເຮັດການຕະຫຼາດ ແລະ ໂຄສະ ນາເສັ້ນທາງ. |

| ໄລຍະ ເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບ ຄ່າໃຊ້ ຈ່າຍ | ບູລິມະ ສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **TD12 - ກຳນົດພື້ນທີ່ສຳລັບກິດຈະກຳຕັ້ງແຄ້ມ ເພື່ອຮອງຮັບຜູ້ທີ່ມັກໃນການຕັ້ງແຄ້ມ ແລະ ກຸ່ມຕະຫຼາດຄາລາວານລົດ (ໂອກາດການລົງທຶນຂອງຄົນທ້ອງຖິ່ນ)** | | | | | |
| 2024-2027 | ຫ້ອງການ ຖວທ ເມືອງ, ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ຮ່ວມມືກັບ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງ ການທ່ອງທ່ຽວ ວັງວຽງ | ພາກເອກະຊົນ | ປານກາງ ຫາ ສູງ | A | 1. ຈັດກອງປະຊຸມກັບນັກທຸລະກິດ/ນັກລົງທຶນທ້ອງຖິ່ນທີ່ສົນໃຈກ່ຽວກັບການສະໜອງສະຖານທີ່ບໍລິການຕັ້ງແຄ້ມ/ຄາຣາວານ ແລະ ໂອກາດທາງທຸລະກິດ.<br>2. ຮ່າງກົດລະບຽບຄຸ້ມຄອງສະຖານທີ່ຕັ້ງແຄ້ມ ແລະ ຄາລາວານ.<br>3. ພັດທະນາລາຍການກວດກາເພື່ອປະເມີນສະຖານທີ່ທີ່ເໝາະສົມກັບການສະໜອງບໍລິການດັ່ງກ່າວ.<br>4. ອານຸຍາດໃຫ້ສະຖານທີ່ເປີດບໍລິການຕັ້ງແຄ້ມ/ຄາຣາວານ. |
| **TD13 - ສົ່ງເສີມການພັດທະນາສະຖານທີ່ພັກແຮມ ທີ່ບໍ່ສົ່ງຜົນກະທົບຕໍ່ທັດສະນີຍະພາບ ແລະ ສິ່ງແວດລ້ອມຢູ່ເສັ້ນທາງວົງແຫວນເບື້ອງຕາເວັນຕົກ** | | | | | |
| 2024-2032 | ຫ້ອງການ ຖວທ ເມືອງ, ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ ຮ່ວມມືກັບ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງ ການທ່ອງທ່ຽວ ວັງວຽງ | ພາກເອກະຊົນ | ປານກາງ ຫາ ສູງ | C | 1. ປະເມີນຄວາມສົນໃຈຈາກນັກລົງທຶນ ແລະ ຊຸມຊົນທີ່ມີທ່າແຮງ ໃນການສ້າງທີ່ພັກທີ່ມີຄຸນນະພາບ.<br>2. ເຮັດວຽກຮ່ວມກັບນັກລົງທຶນເພື່ອແນະນຳ ແລະ ຮັບປະກັນການພັດທະນາທີ່ພັກ ແລະ ການບໍລິການທີ່ເໝາະສົມ ແລະ ສອດຄ່ອງກັບສະພາບແວດລ້ອມ.<br>3. ແນະນຳຜູ້ລົງທຶນໃຫ້ປະຕິບັດຕາມລະບຽບການ ເພື່ອໃຫ້ໄດ້ຕາມມາດຕະຖານອາຊຽນ ຫຼື |

| ໄລຍະ ເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບ ຄ່າໃຊ້ ຈ່າຍ | ບູລິມະ ສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | | | | ມາດຕະຖານທີ່ກ່ຽວຂ້ອງ ຂອງ ການພັກເຊົາແບບຍືນຍົງ. |

## ຄວາມອາດສາມາດຂອງຕົວເມືອງໃນການຮັບມືກັບສະພາບການຕ່າງໆ

| ໄລຍະ ເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບ ຄ່າໃຊ້ ຈ່າຍ | ບູລິມະ ສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **UR1 – ຈາກັດການຂະຫຍາຍຕົວຂອງຕົວເມືອງ, ການປຸກສ້າງອາຄານຕ້ອງຫ່າງຈາກ ແຄມນ້ຳຂອງ 25 ແມັດ** | | | | | |
| 2023 ເປັນຕົ້ນໄປ | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ໂຍທາທິການ ແລະ ຂົນສົ່ງ<br>ຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ<br>DAO | ພາກລັດ | ຕ່ຳ | A | 1. ປັບປຸງລະບຽບການ ແລະ ແຜນຄຸ້ມຄອງຜັງເມືອງທີ່ ກ່ຽວຂ້ອງຂອງເມືອງວັງວຽງ ແລະ ບໍລິເວນອ້ອມຮອບ ເພື່ອຈຳກັດການຂະຫຍາຍ ຕົວຂອງຕົວເມືອງພາຍໃນ ຂອບເຂດຂອງທາງນ້ຳ 25 ແມັດ. |
| **UR2 - ຕິດຕາມສະພາບການປ່ຽນແປງໄພນ້ຳຖ້ວມແຕ່ລະໄລຍະ** | | | | | |
| 2023- ເປັນຕົ້ນໄປ | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ໂຍທາທິການ ແລະ ຂົນສົ່ງ<br>ຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ<br>DAO | ພາກລັດ, ຜູ້ໃຫ້ ທຶນ | ປານ ກາງ | A | 1. ສ້າງຄະນະປະຕິບັດງານເພື່ອ ຕິດຕາມຄວາມສ່ຽງໄພນ້ຳ ຖ້ວມ.<br>2. ກຳນົດຕົວຊີ້ວັດ ເພື່ອຊ່ວຍ ການຕັດສິນໃຈໃນອະນາຄົດ ກ່ຽວກັບການນຳໃຊ້ ແລະ ການພັດທະນາທີ່ດິນໃນ ອະນາຄົດ. |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບຸລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| **UR3 - ປູກຈິດສຳນຶກຄວາມຮັບຮູ້ຂອງປະຊາຊົນກ່ຽວກັບຄວາມສ່ຽງຈາກນ້ຳຖ້ວມທີ່ເພີ່ມຂຶ້ນທົ່ວເຂດບໍລິເວນນ້ຳຊອງ. ຕິດຕັ້ງລະບົບເຕືອນໄພລ່ວງໜ້າທີ່ສາມາດແຈ້ງໃຫ້ນັກທ່ອງທ່ຽວ ແລະ ຜູ້ຢູ່ອາໄສຮູ້ເຖິງເຫດການນ້ຳຖ້ວມທີ່ມີຄວາມສ່ຽງສູງ.** | | | | | |
| 2023-ເປັນຕົ້ນໄປ | ໂຍທາທິການ ແລະ ຂົນສົ່ງ<br>ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>DAO | ພາກລັດ, ຜູ້ໃຫ້ທຶນ | ຕ່ຳ - ປານກາງ | A | 1. ແຕ່ງຕັ້ງຜູ້ຊ່ຽວຊານດ້ານການສື່ສານ ເພື່ອໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບຄວາມສ່ຽງໄພນ້ຳຖ້ວມ.<br>2. ການເຜີຍແຜ່ຂໍ້ມູນກ່ຽວກັບຄວາມສ່ຽງໄພນ້ຳຖ້ວມ ຄວນພິຈາລະນາການນຳໃຊ້ເຄືອຂ່າຍຊຸມຊົນ ແລະສະມາຄົມທີ່ມີຢູ່ແລ້ວ, ພິຈາລະນານຳໃຊ້ເຕັກໂນໂລຢີທີ່ໃຊ້ທົ່ວໄປເພື່ອປູກຈິດສຳນຶກ.<br>3. ດຳເນີນການໂຄສະນາ ແລະ ທົບທວນຜົນກະທົບຕໍ່ລະດັບຄວາມຮັບຮູ້ຂອງຊຸມຊົນ.<br>4. ແຕ່ງຕັ້ງຜູ້ຊ່ຽວຊານໃຫ້ຄຳແນະນຳກ່ຽວກັບລະບົບເຕືອນໄພລ່ວງໜ້າທີ່ເໝາະສົມກັບສະພາບການຂອງເມືອງວັງວຽງ.<br>5. ຊອກຫາທຶນໃນການຈັດຕັ້ງປະຕິບັດລະບົບເຕືອນໄພລ່ວງຫນ້າ. |
| **UR4 – ອອກແບບລະບົບລະບາຍນ້ຳເປື້ອນຕາມເສັ້ນທາງໃນຕົວເມືອງ** (WSUD | | | | | |
| 2024 – 2033 (ພວມດຳເນີນ) | ໂຍທາທິການ ແລະ ຂົນສົ່ງ<br>ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ<br>DAO | ພາກລັດ, ຜູ້ໃຫ້ທຶນ | ສູງ | B | 1. ສົມທົບກັບທີ່ປຶກສາ/ວິສະວະກອນ ດ້ານການລະບາຍນ້ຳ ເພື່ອທົບທວນຄືນປະເພດຂອງການປັບປຸງຮ່ອງລະບາຍນ້ຳຖະຫນົນໃນເມືອງວັງວຽງ.<br>2. ຄັດເລືອກວິທີການທີ່ເໝາະສົມ ແລະ ສອດຕ່ອງກັບ |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | | | | ສະພາບ ແລະ ກ້າວຜ່ານໄລຍະຂອງການປະເມີນຜົນກະທົບ/ການປຶກສາຫາລື/ການອະນຸມັດ/ການຈັດຕັ້ງປະຕິບັດ. |
| **UR5 – ການພັດທະນາທຸກຮູບແບບໃນອະນາຄົດ ຕ້ອງຮັບປະກັນໃຫ້ມີລະບົບຮ່ອງລະບາຍນ້ຳເປື້ອນ ແລະ ຂຸມດັກໄຂມັນ** | | | | | |
| 2024 – ongoing | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ໂຍທາທິການ ແລະ ຂົນສົ່ງ<br>ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>DAO | ພາກລັດ<br>ເອກະຊົນ | ຕໍ່າ | A | 1. ນຳເອົາຂໍ້ກຳນົດກ່ຽວກັບການຕິດຕັ້ງລະບົບລະບາຍນ້ຳເປື້ອນ ແລະ ຂຸມດັກໄຂມັນ ສຳລັບການພັດທະນາໃຫມ່ ທັງຫມົດເຂົ້າໃນລະບຽບການຄຸ້ມຄອງ.<br>2. ໃຫ້ຄຳແນະນຳ ແລະ ເຄື່ອງມື/ມາດຕະຖານ ສຳລັບນັກລົງທຶນ ແລະ ຜູ້ພັດທະນາ ກ່ຽວກັບວິທີສ້າງລະບົບລະບາຍນ້ຳ ແລະ ຂຸມດັກໄຂມັນ. |
| **UR6 - ນຳໃຊ້ລະບຽບການ/ຄູ່ມື/ມາດຕະຖານ ການຫຼຸດຜ່ອນໄພພິບັດ ແລະ ຄວາມສ່ຽງ ຕ້ອງໄດ້ນຳໃຊ້ໃນການປະເມີນທຸກໆໂຄງການສະເໜີໃໝ່ (ທັງພາກເອກະຊົນ ແລະ ພາກລັດ).** | | | | | |
| 2024-2025 | ຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງ<br>ໂຍທາທິການ ແລະ ຂົນສົ່ງ<br>ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>DAO | ພາກລັດ,<br>ເອກະຊົນ | ຕໍ່າ | A | 1. ທົບທວນຄືນແຜນການຄຸ້ມຄອງໄພພິບັດ ແລະ ການຫຼຸດຜ່ອນຄວາມສ່ຽງທີ່ມີຢູ່ແລ້ວ.<br>2. ແຕ່ງຕັ້ງຜູ້ຊ່ຽວຊານເພື່ອກະກຽມແຜນຫຼຸດຜ່ອນໄພພິບັດ ແລະ ຄວາມສ່ຽງ (ແລະ/ຫຼືມາດຕະຖານ)<br>3. ຈັດຕັ້ງປະຕິບັດແຜນ (ແລະ ຫຼືມາດຕະຖານ) ເຂົ້າໃນລະບຽບການທີ່ກ່ຽວຂ້ອງ, |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | | | | ຮຽກຮ້ອງໃຫ້ໂຄງການໃໝ່ທັງໝົດໄດ້ຮັບການປະເມີນຄວາມສ່ຽງຕາມແຜນຄຸ້ມຄອງໄພພິບັດ (ແລະ/ຫຼືມາດຕະຖານ). |
| **UR7 – ສະໜັບສະໜູນປະຊາຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວໃຫ້ມີຄວາມປອດໄພດັ່ງນີ້:** | | | | | |
| ▪ **UR7A ພັດທະນາແອັບ (Application) ສໍາລັບຈຸດໝາຍປາຍທາງການທ່ອງທ່ຽວຂອງເມືອງ ວັງວຽງ ເພື່ອສະໜອງຂໍ້ມູນສະຖານທີ່ທ່ອງທ່ຽວ, ການບໍລິການ ແລະ ຄວາມປອດໄພ** | | | | | |
| 2025-2027 | ຫ້ອງການ ຖວທ ເມືອງ ແລະ ແຂວງ ສົມທົບກັບ DMN ວັງວຽງ | ລັດຖະບານ ດ້ວຍການສະໜັບສະໜູນຈາກຜູ້ໃຫ້ທຶນທີ່ເປັນໄປໄດ້ | ຕ່ຳ | B | 1. ຄົ້ນຄ້ວາ ແລະ ສົມທຽບປະສິດທິພາບຂອງ 'ແອັບ' ທີ່ຄ້າຍຄືກັນ (ເຊັ່ນຂອງຫຼວງພະບາງ).<br>2. ກະກຽມຄວາມຕ້ອງການສະເພາະການດໍາເນີນງານຂອງແອັບ ແລະ ງົບປະມານ.<br>3. ຊອກຫາການຊ່ວຍເຫຼືອດ້ານງົບປະມານຖ້າຈໍາເປັນ.<br>4. ປະມູນວຽກ ແລະ ຈັດຫາສະໜອງບໍລິການ<br>5. ອອກແບບແອັບ ໂດຍການຮ່ວມມືຢ່າງໃກ້ຊິດກັບຜູ້ມີສ່ວນຮ່ວມພາກລັດ ແລະ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ວັງວຽງ. |
| ▪ **UR7B ຜູ້ສະໜອງ/ຜູ້ໃຫ້ບໍລິການກິດຈະກໍາການທ່ອງທ່ຽວແບບຜະຈົນໄພຕ້ອງໄດ້ຮັບອະນຸຍາດການບໍລິການຖືກຕ້ອງຕາມລະບຽບການ ໃຫ້ມີຄວາມປອດໄພ ແລະ ໄດ້ມາດຕະຖານ ລະດັບຊາດ ຫຼື ສາກົນ.** | | | | | |
| 2024-2026 | ຫ້ອງການ ຖວທ ເມືອງ ແລະ ແຂວງ ຮ່ວມມືກັບ DMN ວັງວຽງ ແລະ ການຊ່ວຍເຫຼືອດ້ານວິຊາການຈາກ ຖວທ ສູນກາງ | ລັດຖະບານ ດ້ວຍການສະໜັບສະໜູນທີ່ເປັນໄປໄດ້ຈາກ ADB TIIGP2 | ຕ່ຳ | A | 1. ທົບທວນລະບຽບ ແລະກົດໝາຍດ້ານຄວາມປອດໄພຂອງອຸດສາຫະກໍາທ່ອງທ່ຽວ/ກິດຈະກໍາໃນປະຈຸບັນ. |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | ກ່ອນເດືອນທັນວາ 2024 | | | 2. ຮ່າງກົດໝາຍ ແລະ ລະບຽບການດ້ານຄວາມປອດໄພໃໝ່ທີ່ສອດຄ່ອງ.<br>3. ຮ່ວມມືດ້ານວິຊາການກັບຜູ້ຊ່ຽວຊານສະເພາະດ້ານ (ເຊັ່ນ: ສໍາລັບສະລິງ, ການປີນພູ, ປູມເປົ້າອາກາດຮ້ອນ, ແລະອື່ນໆ)<br>4. ນໍາໃຊ້ມາດຕະຖານຄວາມປອດໄພທີ່ມີຢູ່ແລ້ວ, ທີ່ໄດ້ຮັບການຍອມຮັບຈາກສາກົນຈາກບ່ອນອື່ນ (ເຊັ່ນ: ນິວຊີແລນ, ໄທ, ອົດສະຕາລີ, ການາດາ ຫຼື ສະຫະລັດ) ເປັນພື້ນຖານ ແລະ ບ່ອນອີງ.<br>5. ປະຕິບັດການຖ່າຍທອດທັກສະ/ການສ້າງຄວາມອາດສາມາດໃຫ້ແກ່ຜູ້ປະກອບການລາວ ແລະ ຜູ້ທີ່ຈະກວດສອບຄວາມປອດໄພ ແລະ ການບັງຄັບໃຊ້ລະບຽບໃນພາກລັດ ຫຼື ສະມາຄົມອຸດສາຫະກໍາ.<br>6. ກວດສອບເອກະລາດທຸກໆ 2 ປີ. |
| **UR7C ຝຶກອົບຮົມ ແລະ ອອກໃບຢັ້ງຢືນກ່ຽວກັບການບໍລິການດ້ານຄວາມປອດໄພ ສໍາລັບທຸລະກິດ ແລະ ຜູ້ບໍລິການກິດຈະການການທ່ອງທ່ຽວແບບພະຈົນໄພ** | | | | | |
| 2025-2028 | ຫ້ອງການ ຖວທ ເມືອງ ແລະ ແຂວງ ແລະ ເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວວັງວຽງ | ການສະໜັບສະໜູນຈາກຜູ້ໃຫ້ທຶນ ອາດແມ່ນພາຍໃຕ້ໂຄງການ ADB TIIGP2, | ຕໍ່າ | A | 1. ສ້າງລະບຽບການ ແລະ ລະບຽບຄວາມປອດໄພໃໝ່ (UR10), ດໍາເນີນການຝຶກອົບຮົມຄວາມປອດໄພປະຈໍາປີໃຫ້ແກ່ຜູ້ປະກອບການທ່ອງທ່ຽວຜະຈົນໄພ. |

| ໄລຍະເວລາ | ອົງການທີ່ຮັບຜິດຊອບ | ແຫຼ່ງທຶນ | ລະດັບຄ່າໃຊ້ຈ່າຍ | ບູລິມະສິດ (A/B/C) | ຂັ້ນຕອນ |
|---|---|---|---|---|---|
| | | ຜູ້ໃຫ້ທຶນທີ່ມີທ່າແຮງອື່ນໆ ລວມມີໂຄງການຊ່ວຍເຫຼືອ NZ, DFAT ຂອງອົດສະຕາລີ, ສະຖານທູດຝຣັ່ງ ແລະ ສະຖານທູດການາດາ. | | | 2. ຊອກຫາການຊ່ວຍເຫຼືອຂອງຜູ້ໃຫ້ທຶນສໍາລັບໂຄງການແລກປ່ຽນການຝຶກອົບຮົມຈາກຜູ້ຊ່ຽວຊານໃນຈຸດໝາຍປາຍທາງການທ່ອງທ່ຽວຜະຈົນໄພທີ່ໄດ້ຮັບການຍອມຮັບໃນທົ່ວໂລກເຊັ່ນ: ເມືອງຄວີນສທາວ (ນິວຊີແລນ), ລັດບຣິຕິສໂຄລົມເບຍ (ການາດາ), ອົດສະຕາລີ ຫຼື ຝຣັ່ງ. |

**ຄໍາແນະນໍາກ່ຽວກັບການຄຸ້ມຄອງບັນຫາມົນລະພິດທາງສຽງທີ່ເກີດຈາກກິດຈະກໍາບັນເທີງ ແລະ ການທ່ອງທ່ຽວ**

ຄໍາແນະນໍາ ເພື່ອຄຸ້ມຄອງມົນລະພິດທາງສຽງຈາກການບັນເທີງ, ພາຫະນະຜະຈົນໄພ ແລະ ເຮືອຢູ່ນໍ້າຊອງ. ຈຸດປະສົງຂອງຄໍາແນະນໍາເຫຼົ່ານີ້ ແມ່ນເພື່ອຫຼຸດຜ່ອນຜົນກະທົບທາງສຽງຕໍ່ປະຊາຊົນ ແລະ ນັກທ່ອງທ່ຽວ. ໃນປັດຈຸບັນ, ຫຼັກຖານທາງດ້ານນິເວດວິທະຍາຊີ້ໃຫ້ເຫັນວ່າສຽງລົບກວນແມ່ນບັນຫາທີ່ແທ້ຈິງສໍາລັບນັກທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນ. ແຫຼ່ງທີ່ມາຂອງສຽງ ຈໍານວນໜຶ່ງແມ່ນເກີດມາຈາກເຮືອຫາງຍາວຢູ່ຕາມລໍານໍ້າຊອງ ແລະ ສຽງດົນຕີຢູ່ຕາມແຄມນໍ້າຊອງ, ໂດຍສະເພາະຢູ່ຝັ່ງຕາເວັນຕົກຂອງແມ່ນໍ້າຊອງ ຊຶ່ງເປັນບ່ອນທີ່ມີໂຮງແຮມສ່ວນໃຫຍ່ຕັ້ງຢູ່.

ມີໂອກາດທີ່ເຮືອຫາງຍາວສາມາດປ່ຽນຈັກເຮືອມາເປັນເຄື່ອງຈັກໄຟຟ້າ, ປະຈຸບັນນີ້ເຮືອທີ່ແລ່ນດ້ວຍເຄື່ອງຈັກໄຟຟ້າແມ່ນໄດ້ຖືກນໍາໃຊ້ຢູ່ຕາມແມ່ນໍ້າຊອງແລ້ວ. ເຄື່ອງຈັກໄຟຟ້າຈະຊ່ວຍແກ້ໄຂບັນຫາສຽງດັງໃນປະຈຸບັນ ແລະ ຮັກສາວັງວຽງໃຫ້ເປັນຈຸດໝາຍປາຍທາງທີ່ຍືນຍົງ.

ຂໍ້ແນະນໍາທີ່ກ່າວມານີ້ແມ່ນອີງໃສ່ລະບຽບການຈາກບັນດາເມືອງທ່ອງທ່ຽວອື່ນໆ ທີ່ມີສະຖານທີ່ບັນເທີງ. ຂອບເຂດຈໍາກັດສຽງທີ່ແນະນໍາ ໂດຍທົ່ວໄປແມ່ນຖືວ່າເປັນການປະນີປະນອມທີ່ສົມເຫດສົມຜົນລະຫວ່າງສະຖານທີ່ບັນເທີງ ແລະ ປະຊາຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ.

**ຄຳແນະນຳການດຳເນີນງານສຳລັບກິດຈະກຳການບັນເທີງ ແລະ ກິດຈະກຳການທ່ອງທ່ຽວ**

**ວິທີການນຳໃຊ້ຄຳແນະນຳເຫຼົ່ານີ້**

ກິດຈະກຳການບັນເທີງ ແລະ ການທ່ອງທ່ຽວຢູ່ເມືອງວັງວຽງ ແລະ ສິ່ງແວດລ້ອມຕ້ອງບັນລຸຈຸດປະສົງດັ່ງລຸ່ມນີ້.

ກິດຈະກຳການບັນເທີງ ແລະ ການທ່ອງທ່ຽວໃນເມືອງວັງວຽງ ແລະ ບໍລິເວນອ້ອມຮອບຄວນປະຕິບັດຕາມມາດຕະຖານລຸ່ມນີ້.

ມາດຕະຖານປະກອບດ້ວຍຂໍ້ກຳນົດ ເພື່ອຕອບສະໜອງຈຸດປະສົງ. ປົກກະຕິຄວນບັນລຸມາດຕະຖານ. ມາດຕະຖານແມ່ນນຳໃຊ້ ເພື່ອຊ່ວຍແກ້ໄຂຂໍ້ຂັດແຍ້ງ ຫຼື ທົບທວນຄຳຮ້ອງທຸກກ່ຽວກັບການດຳເນີນກິດຈະກຳການບັນເທີງ ແລະ ກິດຈະກຳການທ່ອງທ່ຽວໂດຍສະເພາະ.

**ຈຸດປະສົງ - ສຽງລົບກວນ**

ເພື່ອຮັບປະກັນວ່າມົນທະພິດທາງສຽງທີ່ມາຈາກການດຳເນີນງານຂອງກິດຈະກຳການບັນເທີງ ແລະ ການທ່ອງທ່ຽວບໍ່ໄດ້ສ້າງຄວາມລົບກວນ ແລະ ສິ່ງຜົນກະທົບໃນລະດັບທີ່ບໍ່ສາມາດຍອມຮັບໄດ້.

**ມາດຕະຖານ - ສຽງລົບກວນ**

| | ການເຄື່ອນໄຫວ ຫຼື ແຫຼ່ງສຽງ | ສະຖານທີ່ການປະເມີນ | ເວລາ | ຂີດຈຳກັດສຽງລົບກວນ |
|---|---|---|---|---|
| N1 | ເຮືອຈັກຢູ່ນ້ຳຊອງ, ແລະ ລົດຈັກບັກກີ້ ຫຼື ພາຫະນະອື່ນໆ (ຍົກເວັ້ນລົດຈັກ) ຢູ່ທຸກບ່ອນໃນຕົວເມືອງ. | ຫ່າງຈາກເຮືອຈັກ 20 ແມັດ | 8 ໂມງເຊົ້າ - 8 ໂມງແລງ | 70 dB ສູງສຸດ |
| | | ຫ່າງຈາກລົດບັກກີ້ 5 ແມັດ ແລະ ພາຫະນະອື່ນໆ (ຍົກເວັ້ນລົດຈັກ) | 8 ໂມງເຊົ້າ - 8 ໂມງແລງ | 50 dB ສູງສຸດ |
| N2 | ດົນຕີ / ບັນເທີງພາຍໃນຕົວເມືອງວັງວຽງ | ເຂດທີ່ຢູ່ອາໄສພາຍໃນເມືອງວັງວຽງ | 8ໂມງເຊົ້າ - ທ່ຽງຄືນ | 65 dB ສູງສຸດ |
| | | | ທ່ຽງຄືນ - 8ໂມງເຊົ້າ | 50 dB ສູງສຸດ |
| N3 | ດົນຕີ / ບັນເທີງໂດຍກົງແຄມນ້ຳຊອງ (ທັງສອງຝັ່ງແມ່ນ້ຳ) | ຫ່າງຈາກແຫຼ່ງດົນຕີ 50 ແມັດ | 8ໂມງເຊົ້າ to 11ໂມງແລງ | 65 dB ສູງສຸດ |
| | | | 11ໂມງແລງ to 8ໂມງເຊົ້າ | 40 dB ສູງສຸດ |
| N4 | ຜູ້ປະກອບການຄວນໄດ້ຮັບໃບອະນຸຍາດ (ອະນຸມັດ) ຈາກອຳນາດການປົກຄອງຂອງລັດທີ່ກ່ຽວຂ້ອງ ເພື່ອນຳໃຊ້ເຮືອຈັກຢູ່ນ້ຳຊອງ ແລະ ລົດບັກກີ້. | | | |
| N5 | ສຳລັບດົນຕີ ແລະ ການບັນເທີງພາຍໃນເມືອງວັງວຽງ, ຄວນໄດ້ຮັບໃບອະນຸຍາດ (ອະນຸມັດ) ຈາກອຳນາດການປົກຄອງທີ່ກ່ຽວຂ້ອງສຳລັບກິດຈະກຳພິເສດ. | | | |
| N6 | ສຳລັບດົນຕີ ແລະ ການບັນເທີງຢູ່ແຄມນ້ຳຊອງ (ທັງ 2 ຝັ່ງແມ່ນ້ຳຂອງ), ຄວນຂໍອະນຸຍາດ (ອະນຸມັດ) ຈາກອຳນາດການປົກຄອງຂອງລັດທີ່ກ່ຽວຂ້ອງເພື່ອຈັດກິດຈະກຳພິເສດ. | | | |

**ໝາຍເຫດ:** ເພື່ອເຂົ້າໃຈຜົນກະທົບທີ່ກ່ຽວຂ້ອງ ຫຼື ການລົບກວນຈາກລະດັບສຽງທີ່ແຕກຕ່າງກັນ (ໃນ dB), ຂະໜາດດັ່ງຕໍ່ໄປນີ້ສາມາດນຳໃຊ້ເປັນຄຳແນະນຳທົ່ວໄປ:

0 - 30dB = '*ງຽບຫຼາຍ*', 31- 60dB = 'ງຽບ', 61 – 80 dB = ສຽງດັງ (ມີຜົນກະທົບ)', ແລະ 81dB+ = 'ສຽງດັງຫຼາຍ ແລະ ສ່ຽງຕໍ່ການສ້າງຄວາມເສຍຫາຍ'.

**ຈຸດປະສົງ - ໄຟແສງສີ**

ເພື່ອຮັບປະກັນວ່າໄຟແສງສີທີ່ໃຊ້ກ່ຽວຂ້ອງກັບການບັນເທີງ ແລະ ກິດຈະກໍາການທ່ອງທ່ຽວ ແລະ ທຸລະກິດບໍ່ສ້າງລະດັບການລົບກວນ ແລະ ຜົນກະທົບທີ່ບໍ່ສາມາດຍອມຮັບໄດ້.

**ມາດຕະຖານ - ແສງສະຫວ່າງ**

| | |
|---|---|
| L1 | ໄຟແສງສີທັງໝົດທີ່ກ່ຽວຂ້ອງກັບກິດຈະກໍາບັນເທີງ ແລະ ການທ່ອງທ່ຽວ ແລະ ທຸລະກິດຕ່າງໆ ຄວນຖືກອອກແບບ ເພື່ອຈໍາກັດແສງສະຫວ່າງທີ່ສ່ອງເຂົ້າໄປໃນພື້ນທີ່ອ້ອມຂ້າງ ໂດຍມີການປ້ອງກັນ ແລະ ບັງໄຟຕາມຄວາມເໝາະສົມ. |
| L2 | ແສງທັງໝົດຄວນຖືກອອກແບບ ເພື່ອຫຼຸດຜ່ອນການສ້າງແສງສະທ້ອນ. |
| L3 | ຄວນຫຼີກເວັ້ນການນໍາໃຊ້ໄຟກະພິບ. |
| L4 | ຄວນຖືກຫຼຸດຜ່ອນການໃຊ້ໄຟສ່ອງສະຫວ່າງເໜືອຂັ້ນທີ່ໜຶ່ງ. |
| L5 | ຫຼີກເວັ້ນໄຟສ່ອງສະຫວ່າງທີ່ຊ່ອງໃສ່ປ້າຍໂດຍກົງ. |

**ຈຸດປະສົງ – ການປ່ອຍອາຍພິດທາງອາກາດ**

ເພື່ອຮັບປະກັນຜົນກະທົບຕໍ່ສຸຂະພາບຂອງມະນຸດຈາກການປ່ອຍອາຍພິດທາງອາກາດທີ່ກ່ຽວຂ້ອງກັບການດໍາເນີນກິດຈະກໍາບັນເທີງ ແລະ ການທ່ອງທ່ຽວໃຫ້ໜ້ອຍລົງ.

**ມາດຕະຖານ – ການປ່ອຍອາຍພິດທາງອາກາດ**

| | |
|---|---|
| A1 | ພາຫະນະໂດຍສານ ແລະ ພາຫະນະທົ່ວໄປ (ທັງນໍ້າມັນ ແລະ ກາຊວນ), ແລະ ລົດບັນທຸກ ແລະ ລົດເມ (ເຄື່ອງຈັກກາຊວນໜັກ) ທີ່ນໍາໃຊ້ເພື່ອການທ່ອງທ່ຽວຄວນຕອບສະໜອງໄດ້ມາດຕະຖານການປ່ອຍອາຍພິດ 'ເອີໂຣ 5'. |
| A2 | ລົດຈັກທີ່ໃຊ້ເພື່ອການທ່ອງທ່ຽວຄວນຕອບສະໜອງໄດ້ມາດຕະຖານການປ່ອຍອາຍພິດ 'ເອີໂຣ 4'. |
| A3 | ຜູ້ປະກອບການ ແລະ ພະນັກງານຂອງກິດຈະກໍາບັນເທີງ ແລະການທ່ອງທ່ຽວ ບໍ່ຄວນຈູດຂີ້ເຫຍື້ອ ທີ່ມີພລາສຕິກ ຫຼື ຈູດຂີ້ເຫຍື້ອສະຊາຍ. |

**ໝາຍເຫດ:** ມາດຕະຖານການປ່ອຍອາຍພິດທີ່ອ້າງເຖິງຂ້າງເທິງແມ່ນສະຫຼຸບຢູ່ທີ່ https://en.wikipedia.org/wiki/European_emission_standards ບ່ອນທີ່ມີມາດຕະຖານ Euro 5a ແລະ Euro 5b, ມາດຕະຖານ Euro 5b ຄວນຖືກນໍາໃຊ້.

**จุดปะสົງ - ຄວາມໄວ**

ເພື່ອຮັບປະກັນວ່າຍານພາຫະນະ, ເຮືອຈັກ ແລະ ເຮືອສ່ວນບຸກຄົນຄວນແລ່ນດ້ວຍຄວາມໄວ

**ມາດຕະຖານ – ຄວາມໄວ**

| | |
|---|---|
| **S1** | ເຮືອຈັກປະເພດຕ່າງໆ (ລວມທັງ jet skis ແລະ ຄ້າຍຄືກັນ) ຈະຕ້ອງບໍ່ແລ່ນເກີນຄວາມໄວ 5 ນ໋ອດ ເມື່ອຢູ່ໃນ 50 ແມັດຈາກບຸກຄົນ, ເຮືອອື່ນໆ, ໂຄງສ້າງຄົງທີ່ ຫຼື ຟູນ້ຳ ແລະ ຝັ່ງແມ່ນ້ຳຂອງ. |
| **S2** | ລົດໃຫຍ່, ລົດຈັກ ແລະ ລົດບັກກີ້ ຈະຕ້ອງບໍ່ແລ່ນເກີນຄວາມໄວ 20 ກິໂລແມັດຕໍ່ຊົ່ວໂມງ ຢູ່ຖະໜົນຫົນທາງທີ່ໃຊ້ຮ່ວມກັນໃນຕົວເມືອງວັງວຽງ. |
| **S3** | ລົດໃຫຍ່, ລົດຈັກ ແລະ ບັກກີ້ ບໍ່ຄວນແລ່ນເກີນຄວາມໄວ 30 ກິໂລແມັດຕໍ່ຊົ່ວໂມງ ຢູ່ເສັ້ນທາງເໜືອ-ໃຕ້ ແຄມນ້ຳຂອງ. |
| **S4** | ລົດໃຫຍ່, ລົດຈັກ ແລະ ລົດບັກກີ້ ບໍ່ຄວນແລ່ນເກີນຄວາມໄວ 40 ກິໂລແມັດຕໍ່ຊົ່ວໂມງ ຢູ່ຖະໜົນໃນເມືອງວັງວຽງ ແລະ ທາງອ້ອມ (ຍົກເວັ້ນທາງຫຼວງ ແລະ ທາງດ່ວນ). |



# 2

# ຄໍາແນະນໍາການອອກແບບພື້ນທີ່ສາທາລະນະ

ປະເພດຖະໜົນຫົນທາງໃນບໍລິເວນຕົວເມືອງວັງວຽງ




| | |
|---|---|
| TYPE 1 | 2- way road-Footpath - no car parking |
| TYPE 2 | 1- way road-Footpath - with car parking |
| TYPE 3 | Shared street |
| TYPE 4 | 1 or 2- way road - no Footpath - no car parking |
| TYPE 5A | Laneway with landscape swale |
| TYPE 5B | Laneway with concrete kerb |

Road 13 North

New bridge road

Future bridge

Two way

One way

## ປະເພດຖະໜົນ 1

ເສັ້ນທາງ 2 ເລນ ມີທາງຍ່າງ ແລະ ມີບ່ອນຈອດລົດຢູ່ບາງບ່ອນ

ເສັ້ນທາງປະກອບມີ: A, B5, G, H

ລັກສະນະ:

- ທາງສອງເລນ ຂຶ້ນ-ລົງ
- ການປັບປຸງເສັ້ນທາງຍ່າງ
- ປັບປຸງໄຟເຍືອງທາງ
- ປັບປຸງຮ່ອງລະບາຍນ້ຳຕາມເສັ້ນທາງ






Plan




Section A




Section B



Street View1



Street View2



Street View3



**ປະເພດຖະໜົນ 2**

ເສັ້ນທາງ 1 ເລນ ມີທາງຍ່າງ, ຕົ້ນໄມ້ ແລະ ມີບ່ອນຈອດລົດ

ເສັ້ນທາງປະກອບມີ:: B, C1, C4

ລັກສະນະ:

- ເສັ້ນທາງດຽວ ປູກຕົ້ນໄມ້ ສະຫຼັບ & ບ່ອນຈອດລົດ
- ປັບປຸງເສັ້ນທາງຍ່າງ
- ຖັງຂີ້ເຫຍື້ອ
- ການປັບປຸງເສັ້ນທາງຍ່າງ
- ປັບປຸງໄຟເຍືອງທາງ
- ປັບປຸງຮ່ອງລະບາຍນ້ຳຕາມ ເສັ້ນທາງ







Plan



Street View1




Section A

## ປະເພດຖະໜົນ 3

ຖະໜົນທີ່ໃຊ້ຮ່ວມກັນກັບທາງ 1 ເລນ ແລະ 2 ເລນ, ທາງລົດຖີບ, ແລະ ທາງຍ່າງ

ເສັ້ນທາງປະກອບມີ: B, B1, B4, C3, J, K

ລັກສະນະ:

- ການເຂດ
- ເສັ້ນທາງ 1 ເລນ ແລະ 2 ເລນ
- ການປູກຕົ້ນໄມ້ປະດັບປະດາ
- ການປັບປຸງເສັ້ນທາງຍ່າງ
- ປັບປຸງໄຟເຍືອງທາງ
- ປັບປຸງຮ່ອງລະບາຍນ້ຳຕາມເສັ້ນທາງ







Plan



Section A



Street View1



Street View2



Street View3

## ປະເພດຖະໜົນ 4

ເສັ້ນທາງ 1 ເລນ ແລະ 2 ເລນ ບໍ່ມີທາງຍ່າງ ແລະ ບໍ່ມີບ່ອນຈອດລົດ

ເສັ້ນທາງປະກອບມີ: C2, D, E, F, I

ລັກສະນະ:

- ເສັ້ນທາງ 1 ເລນ ແລະ 2 ເລນ
- ລການປັບປຸງເສັ້ນທາງຍ່າງ
- ປັບປຸງໄຟເບືອງທາງ
- ປັບປຸງຮ່ອງລະບາຍນໍ້າຕາມເສັ້ນທາງ







Plan




Section A

**ປະເພດຖະໜົນ 5AAA**

ເສັ້ນທາງປະກອບມີ: B1

ລັກສະນະ:

- ທາງສອງເລນ ຂຶ້ນ-ລົງ
- ການປັບປຸງເສັ້ນທາງຍ່າງ
- ປັບປຸງໄຟເຍືອງທາງ
- ປັບປຸງຮ່ອງລະບາຍນ້ຳຕາມເສັ້ນທາງ







Plan



Street View1




Section A



Street View2

**ປະເພດຖະໜົນ 5B**

ທາງ 2 ເລນ ປູຢາງ

ເສັ້ນທາງປະກອບມີ: C5

ລັກສະນະ:

- ທາງ 2 ເລນ
- ການປັບປຸງເສັ້ນທາງຍ່າງ
- ປັບປຸງໄຟເຍືອງທາງ
- ປັບປຸງຮ່ອງລະບາຍນ້ຳຕາມເສັ້ນທາງ









Street View1



## ທາງເລືອກອຸປະກອນຕິດຕັ້ງ ແລະ ປະເພດວັດຖຸຕ່າງໆ

| ປະເພດຖະໜົນ 1 | ປະເພດຖະໜົນ 2 | ປະເພດຖະໜົນ 3 |
| --- | --- | --- |
|   |   |   |

| ປະເພດຖະໜົນ 4 | ປະເພດຖະໜົນ 5A | ປະເພດຖະໜົນ 5B |
|---|---|---|
|  |  |  |

## ແຄມນໍ້າຊອງ ແລະ ຕາຝັ່ງ




Plan

Key Plan







# 3

# ຄຳແນະນຳການອອກ ແບບສຳລັບພາກເອກະ

| ຕາຕະລາງຄູ່ມືການອອກແບບ ແລະ ການພັດທະນາ | | | |
|---|---|---|---|
| **No.** | **ພາລາມິເຕີ** | **1. ໃນຂອບເຂດຂະຫຍາຍຕົວເມືອງ (UGB)** | **2. ນອກຂອບເຂດຂະຫຍາຍຕົວເມືອງ (UGB)** |
| 1 | **ຄວາມສູງອາຄານ** | ບໍ່ສູງກວ່າ 5 ຊັ້ນ ຫຼື 18 ແມັດ | ບໍ່ສູງກວ່າ 3 ຊັ້ນ ຫຼື 10 ແມັດ |
| 2 | **ອາຄານ ແລະ ທີ່ຢູ່** | ອາຄານຕ້ອງຕັ້ງຢູ່ທາງຫນ້າຂອງຖະຫນົນ ໂດຍບໍ່ມີການຍັບອອກຈາກຂອບທາງຊັ້ນທີ 1 | ອາຄານຕ້ອງຕັ້ງຢູ່ທາງຫນ້າຂອງຖະຫນົນດ້ວຍການປະໄລຍະຫ່າງຢ່າງຫນ້ອຍ 10 ແມັດຈາກຂອບທາງໃນລະດັບຫນ້າດິນ |
| 3 | **ການຄຸ້ມຄອງສະຖານທີ່** | ການກໍ່ສ້າງອາຄານທັງໝົດບໍ່ເກີນ 70% ຂອງພື້ນທີ່ທັງໝົດ | ການກໍ່ສ້າງອາຄານທັງໝົດບໍ່ເກີນ 35% ຂອງພື້ນທີ່ທັງໝົດ. ໃຫ້ນຳໃຊ້ກັບພື້ນທີ່ໃຫຍ່ກວ່າ 500m2 |
| 4 | **ໄລຍະຫ່າງດ້ານທາງຂ້າງ** | ຮູບແບບທີ່ສ້າງຂຶ້ນຄວນຈິ່ງດ້ານຂ້າງ 2.5m ທັງສອງດ້ານ. ນຳໃຊ້ກັບສະຖານທີ່ທີ່ມີໜ້າກວ້າງກວ່າ 10 ແມັດ.<br>** ການຈິ່ງດິນດ້ານຂ້າງແມ່ນບໍ່ຈຳເປັນໃນເວລາທີ່ມີອາຄານທີ່ຢູ່ຕິດກັນທີ່ສ້າງຂຶ້ນໃນຂອບເຂດຊາຍແດນ.* | ການກໍ່ສ້າງອາຄານຄວນຈິ່ງດິນດ້ານຂ້າງ 10 ແມັດສຳລັບທັງສອງດ້ານ |
| 5 | **ສະທາລະນຸປະໂພກ, ການບໍລິການ, ແລະ ບ່ອນຈອດລົດ** | ຈັດໃຫ້ການບໍລິການສາທາລະນຸປະໂພກ ແລະ ພື້ນທີ່ບ່ອນຈອດລົດໄວ້ຂ້າງດຽວຂອງທະໜົນ ຫຼື ທາງຫລັງຂອງອາຄານ | ຈັດໃຫ້ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ, ການບໍລິການ ແລະ ພື້ນທີ່ບ່ອນຈອດລົດລົດໄວ້ຢູ່ທາງຫລັງຂອງອາຄານ |
| 6 | **ການນຳສະເຫນີຊັ້ນລະດັບຫນ້າດິນ** | ຊຸກຍູ້ໃຫ້ຫນ້າອາຄານມີບ່ອນສັນຈອນໄປມາ, ມີຮ້ານຂາຍເຄື່ອງ ຫຼື ໜ້າຮ້ານ | ຊຸກຍູ້ໃຫ້ຫນ້າອາຄານມີບ່ອນສັນຈອນໄປມາ, ມີຮ້ານຂາຍເຄື່ອງ ຫຼື ພື້ນທີ່ນຳໃຊ້ຊຸມຊົນ |
| 7 | **ໂຄງປະກອບຂອງອາຄານ** | ດ້ານຫນ້າຂອງອາຄານທີ່ເຊື່ອມກັບຖະຫນົນ, ການກໍ່ສ້າງຢູ່ຊັ້ນເທິງຄວນມີລະບຽງ ຫຼື ຕິດແກ້ວສະທ້ອນ | ດ້ານຫນ້າຂອງອາຄານທີ່ເຊື່ອມກັບຖະຫນົນ, ການກໍ່ສ້າງຢູ່ຊັ້ນເທິງຄວນມີລະບຽງ ຫຼື ຕິດແກ້ວສະທ້ອນ |
| 8 | **ການປຸກສ້າງແຄມນ້ຳ** | ອາຄານຄວນມີໄລຍະຫ່າງຢ່າງໜ້ອຍ 8 ແມັດຈາກແຄມແມ່ນ້ຳ, ຮັບປະກັນໃຫ້ມີພື້ນທີ່ໃຊ້ສອຍກາງແຈ້ງແຄມນ້ຳ. | ອາຄານຄວນມີໄລຍະຫ່າງຢ່າງໜ້ອຍ 25 ແມັດຈາກແຄມແມ່ນ້ຳ, ຮັບປະກັນໃຫ້ມີພື້ນທີ່ໃຊ້ສອຍກາງແຈ້ງແຄມນ້ຳ. |
| 9 | **ຮູບແບບຫລັງຄາ** | ຊຸກຍູ້ໃຫ້ມີຮູບແບບຫຼັງຄາທີ່ຫຼາກຫຼາຍ, ຊັ້ນດາດຟ້າ ແລະ ປິດບັງອຸປະກອນບໍລິການບາງອັນ (ເຊັ່ນ: ສາຍໂທລະຄົມມະນາຄົມ ແລະ ເຄື່ອງປັບອາກາດ) | ຊຸກຍູ້ໃຫ້ມີຮູບແບບຫຼັງຄາທີ່ຫຼາກຫຼາຍ ແລະ ປິດບັງອຸປະກອນບໍລິການບາງອັນ (ເຊັ່ນ: ສາຍໂທລະຄົມມະນາຄົມ ແລະ ເຄື່ອງປັບອາກາດ) |

| | | |
|---|---|---|
| 10 | **ວັດສະດຸ** | ອາຄານຄວນໃຊ້ວັດສະດຸທີ່ເໝາະສົມກັບສະພາບແວດລ້ອມຂອງມັນ ແລະ ຖ້າເປັນໄປໄດ້ແມ່ນໃຫ້ນຳໃຊ້ວັດຖຸທ້ອງຖິ່ນ. |



# 4

# ຮູບພາບແນວຄວາມຄິດ

## 4.1 Urban Hotels









## 4.2 Urban villas – Resorts







## 4.3 Urban Guest House







## 4.4 Peri Urban Resort






## 4.5 Peri-Urban Bungalow







## a. Outlying Resorts









## b. Village Homestay









## c. Nature Based Activities






## d. Natural Building Materials






## e. Landscape Elements









## 4.11 Water Elements





